# ປຶ້ມບັນທຶກສີຟ້າ

ບຸນເສີນ ແສງມະນີ



# ປື້ມບັນທຶກສີຟ້າ

ໂດຍ **ບຸນເສັງ ແສງມະນີ**

ຈັດພິມໂດຍ

**ກົມວັນນະຄະດີ ແລະ ວັດທະນະທໍາມະຫາຊົນ**

ອຸປະຖໍາໂດຍ

**ອົງການອຸຍນີເຊັບ ( UNICEF )**

ປື້ມບັນທຶກສີຟ້າ

ໂດຍ ບຸນເສີນ ແສງມະນີ

© ສະຫງວນລິຂະສິດ

ຮູບປະກອບ ສີສຸພົນ ສະວົງລຽນຄຳ

ຮູບໜ້າປົກ ປຸ້ຍ

ຈັດພິມໂດຍ ກົມວັນນະຄະດີ ແລະວັດທະນະທຳມະຫາຊົນ

ອຸປະຖຳໂດຍ ອົງການອຸຍນີເຊັບ ( UNICEF )

ພິມທີ່ ໂຮງພິມສຶກສາ

ຕາມ ທ.ບ. 12 / ພທປ 071195

ພິມເທື່ອທີໜຶ່ງ 1995

ຈຳນວນ 2.000 ຫົວ

# ຄະນະຈັດພິມ

**ເຈົ້າຂອງໂຄງການ :** ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

**ທີ່ປຶກສາ :** ດຣ. ທອງຄຳ ອ່ອນມະນີສອນ ຫົວໜ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

**ຜູ້ດຳເນີນງານ :** ດາລາ ກັນລະຍາ ຄະນະກຳມາທິການແຫ່ງຊາດ ເພື່ອກອງປະຊຸມແມ່ຍິງໂລກຄັ້ງທີ 4, ຮອງຫົວໜ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

**ບັນນາທິການເນື້ອໃນ** : ດາລາ ກັນລະຍາ

ອຸທິນ ບຸນຍາວົງ

ບຸນທະນອງ ຊົມໄຊພົນ

ບຸນເສີນ ແສງມະນີ

ວຽງຄຳ ນັນທະວົງດວງສີ

**ບັນນາທິການສິນ** : ດວງເດືອນ ບຸນຍາວົງ

ໂອທອງ ຄຳອິນຊູ

ຈະເລີນໄຊ ພົມມະວົງສາ

ຈັນເພັດ ຄຳຟອງ

**ກອງເລຂາ** : ວຽງຄຳ ນັນທະວົງດວງສີ ຜູ້ປະສານງານ

ຈັນສະໝຸດ ທິລະກຸນ ຜູ້ປະສານງານ ດ້ານສື່ມວນຊົນ

ສີສຸພັນ ດວງມະນີ ບັນຊີການເງິນ

" ປື້ມຫົວນີ້ ຂ້າພະເຈົ້າໄດ້ທຸ່ມເທເຫື່ອແຮງ, ສະຕິປັນຍາ ແລະ ເວລາ ເພື່ອອຸທິດແດ່ແມ່ຍິງຜູ້ຊຶ່ງຄວນຈະໄດ້ຮັບກຽດ ແລະ ສິດສະເຫມີພາບເທົ່າທຽມເພດຊາຍ, ເຖິງຈະເປັນພຽງຜົນງານຊີ້ນສ່ວນນ້ອຍໆ ແຕ່ຄິດວ່າຍັງດີກວ່າບໍ່ມີໂອກາດໄດ້ເຮັດຫຍັງເພື່ອແມ່ຍິງເລີຍ ... "

*ບຸນເສີນ ແສງມະນີ*

# ສາລະບານ


| | |
|---|---|
| ນີ້ຄືນຈະນີພໍ່ | ໜ້າ 1 |
| ຄູ່ຊີວິດໃນຄວາມມືດ | 12 |
| ປື້ມບັນທຶກສີດຳ | 24 |
| ຂ້ອຍບໍ່ແມ່ນຂໍທານ | 36 |
| ທາງສາຍປ່ຽວ | 47 |
| "ແມ່" | 55 |
| ແຮງກະຕັນຍູ | 63 |
| ປະຫວັດຫຍໍ້ຂອງຜູ້ຂຽນ | 75 |

# ຄຳນຳ

ການພັດທະນາຊັບພະຍາກອນມະນຸດ ເປັນບັນຫາສຳຄັນຂອງແຜນພັດທະນາ ເສດຖະກິດ - ສັງຄົມຂອງລາວ. ເພື່ອຈຸດປະສົງດັ່ງກ່າວ ການອ່ານປຶ້ມເປັນປັດໄຈໜຶ່ງທີ່ຂາດບໍ່ໄດ້ ເພື່ອສ້າງໃຫ້ຄົນມີຄຸນນະພາບ ທັງໃນແງ່ຄວາມສາມາດ ແລະ ຄຸນນະທຳ ແລະ ປຶ້ມທຸກປະເພດທຸກລະດັບ ເປັນສິ່ງຈຳເປັນ. ສະເພາະປີ 1995 ນີ້ ເປັນປີສຳຄັນຂອງແມ່ຍິງທົ່ວໂລກ ໂດຍສະຫະປະຊາຊາດ ໄດ້ຈັດກອງປະຊຸມແມ່ຍິງໂລກຂຶ້ນທີ່ປັກກິ່ງ ນະຄອນຫລວງຂອງ ສ.ປ.ຈີນ ໃນໂອກາດດັ່ງກ່າວ ພວກເຮົາ ຄະນະກຳມະການຈັດພິມສື່ການສຶກສາ ສຳລັບແມ່ຍິງ ຈຶ່ງຈັດພິມປຶ້ມໂຮມເລື່ອງສັ້ນ

ແລະ ບົດກະວີ ທີ່ມີເນື້ອໃນກ່ຽວກັບແມ່ຍິງຂຶ້ນ ເພື່ອເປັນ
ການສ້າງບັນຍາກາດຟົດຟື້ນ ໃຫ້ແກ່ກອງປະຊຸມ ແລະ
ເພື່ອໃຫ້ເປັນສື່ການສຶກສາ ໂດຍຜ່ານ ບົດວັນນະຄະດີ.

ຄະນະພວກເຮົາ ຂໍຂອບໃຈອົງການ ອຸຍນີເຊັບ (UNICEF) ທີ່ໃຫ້ທຶນສະໜັບສະໜູນ ການພິມປຶ້ມຊຸດນີ້ ແລະ ຂອບໃຈບັນດານັກຂຽນ, ນັກກະວີ ທີ່ໄດ້ປະກອບສ່ວນຢ່າງເຕັມທີ່ ຈົນປຶ້ມຊຸດນີ້ສຳເລັດເປັນຜົນອອກມາ.

ດາຣາ ກັນລະຍາ

ຫົວໜ້າໂຄງການ.

24/VII

ຫ້າມຈຳໜ່າຍ

ຖ້າຫາກ ຄອບຄົວມີທັງພໍ່, ແມ່ ແລະ ລູກນຳ ຈຶ່ງຈະແມ່ນ ຄອບຄົວທີ່ມີຄວາມສຸກຢ່າງແທ້ຈິງ, ດັ່ງນັ້ນ ວຽງທອງຈຶ່ງຄິດວ່າມີແຕ່ການເວລາເທົ່ານັ້ນ ຈະຕັດສິນໄດ້ວ່າ : " ມື້ອື່ນລູກຂອງນາງຈະມີພໍ່ໄດ້ຫລືບໍ່ ? "

# ມື້ອື່ນຈະມີພໍ່

" ແມ່ ! ອະເຈົ້າຄືມີພໍ່ ແລະ ມີແມ່ມາຮັບທຸກໆມື້ ". ສຽງນ້ຳນົມຈາກນັກຮຽນອະນຸບານ ຫລຸດລອດຈາກປາກໂດຍທີ່ບໍ່ໄດ້ຕັ້ງໃຈ ແຕ່ກໍ່ສາງຄວາມສະເທືອນໃຈບໍ່ຫນ້ອຍ ໃຫ້ແກ່ຫົວອົກຂອງ ຜູ້ເປັນແມ່.

" ແມ່ ລູກຢາກມີພໍ່ " ປະໂຫຍກທີສອງນີ້ ເຮັດໃຫ້ແມ່ຕ້ອງນັ່ງຢ່ອງຢູ້ລົງ ແນມເບິ່ງຫນ້າລູກ ແລະ ເອົາຝາມືລູບໄລ້ ຕາມເຮືອນຜົມຂອງລູກນ້ອຍ ໄວຫາອວບ ດ້ວຍ ຄວາມຮັກ ແລະ ເອັນດູ.

"ເມືອເຫາະລູກ ໂຮງຮຽນເລີກແຕ່ດົນແລ້ວ".

"ບໍ່ ລູກບໍ່ເມືອ ລູກຢາກມີພໍ່"

"ບໍ່ດື້ນ່າລູກ ໄປເຫາະເມືອເຮືອນເຮົາກ່ອນ ຄຳຣູ... ຄຳຣູ"

ບົນເສັ້ນທາງກັບບ້ານ ວຽງທອງຍັງຄິດເຖິງ ຄຳເວົ້າ ຂອງລູກຊາຍ ອັນໄດ້ເຮັດໃຫ້ນາງງຽບຂຶມ ແລະບໍ່ຮູ້ຈະຕອບຄືແນວໃດ ຖ້າຫາກແອນ້ອຍຖາມ ເຖິງ ບັນຫານີ້ອີກ. ແລະ ແລງຂອງມື້ນັ້ນ ແອນ້ອຍກໍຖາມ ອີກວ່າ:

"ແມ່ ລູກຢາກໄດ້ພໍ່ໃຈດີດີ ໃຈດີຄືອາວບຸນສິງ ອາວບໍ່ຮ້າຍລູກເພິ່ນຈັກເທື່ອ ມື້ໃດກໍ່ຊື້ຂະໜົມມາ ຕ້ອນລູກ ຂອງເພິ່ນ ແລ້ວຍັງແບ່ງໃຫ້ລູກກິນນຳ"

"ຈັ່ງຊັ້ນຊິເອົາໃຜມາເປັນແມ່ອີກລະ" ວຽງທອງ ຖາມລູກຄືນແບບຢອກໄຍ.

"ກະເອົາອາໄພ້ ເມຍອາວບຸນສິງຫັ້ນເດນາ

ເປັນແມ່"

" ໂອ ຈັ່ງຊັ້ນຫວະລູກ ກະໄດ້ລະບໍ່"

ວຽງທອງຫົວຂຶ້ນ ແລ້ວກໍ່ຈູບລູກຊາຍນ້ອຍ ທີ່ບໍ່ຮູ້ດຽງສາ ແຕ່ປະກອບກັບສຽງຫົວນັ້ນ ກໍມີຢາດ ນ້ຳຕາທີ່ໄຫລ ເປັນຄອງ ຜ່ານພວງແກ້ມ.

" ແມ່ ແມ່ຮ້ອງໄຫ້ເຮັດຫຍັງ "

" ບໍ່ມີຫຍັງດອກລູກ ໄປເທາະໄປນອນ ມື້ອື່ນຈະໄດ້ ຕື່ນແຕ່ເຊົ້າ ແລ້ວໄປໂຮງຮຽນ

ຄືນນັ້ນ ທ່າມກາງຄວາມມືດມິດຂອງລາຕີ ການ, ວຽງທອງຍັງບໍ່ທັນນອນ ແລະ ໃນຍາມຫລັບໄຫລຂອງແອນ້ອຍ ນາງກໍຍິ່ງໂດດດ່ຽວປ່ຽວພອຍ ຄວາມໜາວເຢັນ ເຮັດໃຫ້ນາງເກີດສະທ້ານ, ນາງພວມຄິດເຖິງຊີວິດ ຄິດເຖິງທຸກສິ່ງທຸກຢ່າງ ທີ່ມັນຈະເກີດຂຶ້ນໃນອະນາຄົດ ແຕ່ສິ່ງສຳຄັນກໍແມ່ນລູກ, ນາງບໍ່ຢາກໃຫ້ລູກມີປົມດ້ອຍ ຂາດຄວາມອົບອຸ່ນຈາກພໍ່ ແລະແມ່ ແຕ່ນາງຈະເຮັດແນວໃດ ເພື່ອໃຫ້ລູກໄດ້ມີ ພໍ່ທີ່ດີ ມີ

ຄວາມຮັບຜິດຊອບ, ນາງບໍ່ຢາກເຫັນສະພາບ ພໍ່ມ້າຍກັບລູກ ທີ່ບໍ່ເຂົ້າໃຈກັນ ອັນຈະເປັນຜົນສະທ້ອນ ໃຫ້ແກ່ອະນາຄົດ. ຕັ້ງແຕ່ມື້ນັ້ນ ມື້ທີ່ແອນ້ອຍຂາດພໍ່ ຈົນມາເຖິງມື້ນີ້ ນາງກໍຮູ້ຜູ້ຊາຍຄົນຫນຶ່ງ ຊຶ່ງເຂົາເຄີຍສະເຫນີຈະໃຫ້ການອຸ້ມຊູຊ່ວຍເຫລືອແກ່ຄອບຄົວນາງ ເຂົາຄົນນັ້ນເປັນຄົນໂສດ ບ່າວແກ່ ຫນ້າທີ່ ການງານດີມີຖານະ. ນາງເຄີຍປຶກສາຫາລືອາວ ບຸນສິງ ກ່ຽວກັບບັນຫານີ້ ອາວກໍບອກວ່າເຫັນດີ ແຕ່ວຽງທອງ ກໍບໍ່ກ້າຕັດສິນໃຈ, ດັ່ງນັ້ນພາລະຂອງ ຫົວຫນ້າຄອບຄົວ ແລະຄວາມອົບອຸ່ນຂອງລູກ ກໍຍັງເປັນຂອງນາງພຽງຄົນດຽວ. ວຽງທອງນອນ ເອົາແຂນກ່າຍຫນ້າຜາກຄິດເພື່ອ ຊອກຫາທາງອອກ ທີ່ດີ ແຕ່ຍິ່ງຄິດກໍຍິ່ງຕີບຕັນຫັນໃຈຝືດ. ສີ່ປີແລ້ວ ທີ່ວຽງທອງ ໄດ້ອຸ້ມທອບເອົາຄວາມ ວ້າເວ່ນີ້ມາສູ່ ອ້ອມອົກ ແລະ ສີ່ປີຊຶ່ງຄົນທີ່ນາງຮັກຈົນສຸດຫົວໃຈໄດ້ ຈາກໄປ ແລະ ຈາກໄປຢ່າງບໍ່ມີວັນກັບ.

" ອ້າຍອຸດອນ ເພື່ອອີນຍານຂອງອ້າຍຈະໄດ້ໄປສູ່ສຸຄະຕິ ນ້ອງຈະພະຍາຍາມລ້ຽງລູກຂອງເຮົາໃຫ້ດີທີ່ສຸດ " ວຽງທອງຈົ່ມພືມພໍາໃນຄວາມມືດມິດ. ອຸດອນ ແລະວຽງທອງ ແມ່ນຜົວບ່າວເມຍສາວ ຊຶ່ງສອງຄົນຮູ້ຈັກຮັກກັນ ຕັ້ງແຕ່ຍັງຮຽນຢູ່ມະຫາວິທະຍາໄລ. ເມື່ອສໍາເລັດການສຶກສາ ເຂົາເຈົ້າກໍສ້າງຄອບຄົວ ຢູ່ກິນນໍາກັນຢ່າງມີຄວາມສຸກ ແລະ ໃນທີ່ສຸດ ທັງສອງ ກໍມີພະຍານຮັກ ຄືແອນ້ອຍ. ແຕ່ຄວາມຕາຍບໍ່ມີໃຜ ກໍານົດ ແລະ ຫລີກລ່ຽງໄດ້ ອຸດອນ ຈຶ່ງຈາກນາງໄປ ຍ້ອນອຸປະຕິເຫດກາງຖະໜົນ. ຄືນນັ້ນ ເມື່ອສີ່ປີຫລັງ ຂະນະທີ່ນາງພວມນັ່ງລໍຖ້າຟ້າເຂົ້າແລງ ເພື່ອການ ກັບມາຂອງ ຜູ້ເປັນຜົວ ກໍມີຄົນຂີ່ລົດມາຈອດຢູ່ໜ້າບ້ານ ແລະແລ່ນກະຫືດກະຫອບຊົງຕົກໃຈ ເຂົ້າມາຫານາງ ແລ້ວເວົ້າຂຶ້ນວ່າ:

" ເອື້ອຍ! ເອື້ອຍວຽງທອງ ອ້າຍອຸດອນຖືກລົດຕໍາຕາຍແລ້ວ "

ຄຳເວົ້າດັ່ງກ່າວ ໄດ້ເຮັດໃຫ້ ວຽງທອງເປັນລົມ ລົ້ມລົງທາງທວາຍ, ເມື່ອໄດ້ສະຕິນາງກໍຮ້ອງໄຫ້ແທບ ນ້ຳຕາຈະເປັນສາຍເລືອດ ລົດຖີບຄັນດຽວ ທີ່ອຸດອນ ອາໄສຂີ່ໄປການກໍມຸ່ນ ຕືນເປັນເລກແປດ. ແອນ້ອຍ ອາຍຸເກືອບຂວບ ກໍຍັງບໍ່ສາມາດຮັບຮູ້ໄດ້ເຖິງໄພພິບັດ ທີ່ມາສູ່ຄອບຄົວ. ຈົນມາຮອດມື້ນີ້ ມື້ທີ່ ແອນ້ອຍສາມາດ ເວົ້າໄດ້ລົມເປັນ ແລະ ໄດ້ເຂົ້າ ໂຮງຮຽນອະນຸບານ ແອນ້ອຍ ຈຶ່ງຮູ້ສຶກທຽບວ່າ ຊີວິດ ໜຶ່ງໆຕ້ອງມີພໍ່ ແລະ ມີແມ່ນຳ.

ແລງຂອງມື້ນີ້ ທີ່ໂຮງຮຽນອະນຸບານ ໄດ້ມີລົດ ກະບະ ຄັນໜຶ່ງແລ່ນມາຈອດ, ຍິງຊາຍຄູ່ໜຶ່ງ ລົງ ຈາກ ລົດພ້ອມໆກັນ ແລ້ວກໍຍ່າງເບັດໜ້າໄປຫາປະຕູ ຂອງ ໂຮງຮຽນ.

" ແມ່! ລູກຢູ່ນີ້ " ແອນ້ອຍແລ່ນໄປໃສ່ແມ່ ແລ້ວ ຟ້າວລາຍງານ : " ແມ່ ມື້ນີ້ສາວຄູເອົາຂະໜົມ ໃຫ້ລູກ ເປັນຂອງຂວັນ ເພາະລູກນັບເລກເກັ່ງ " ວຽງທອງ

ນັ່ງຢ່ອງຢໍ້ລົງ ແລ້ວເອົາມືລູບຜົມລູກ.

"ເກັ່ງ ລູກຂອງແມ່ເກັ່ງຂະໜາດ ມື້ໜ້ານັບ ເກັ່ງໆເດີ ແລ້ວແມ່ຈະຊື້ຂອງຂວັນໃຫ້, ຊາຍຄົນນັ້ນ ຢືນຢູ່ ທາງຫລັງ ຖັດຫ່າງອອກໄປເລັກນ້ອຍ ພວມ ຫລຽວເບິ່ງສອງແມ່ລູກດ້ວຍຄວາມອີ່ດູຕົນສົງສານ.

"ໄປເທາະລູກ ແມ່ມາຮັບລູກເມືອເຮືອນແລ້ວ"

"ແມ່ ລຸງຜູ້ນັ້ນແມ່ນໃຜ" ແອນ້ອຍຖາມແມ່ ຄ່ອຍໆ ຄ້າຍຄືຢ້ານເພິ່ນໄດ້ຍິນ.

"ເພິ່ນຜູ້ນີ້ລະ ແມ່ຈະເອົາມາເປັນພໍ່ຂອງລູກ ລູກພໍໃຈບໍ່ລະ"

"ແອນ້ອຍ ໄປເທາະລຸງຊິເມືອສົ່ງ ນີ້ເດຂະໜົມ ລຸງຊື້ມາຝາກ"

ລຸງຄົນນັ້ນເວົ້າຂຶ້ນດ້ວຍຄວາມອ່ອນຫວານ ແຕ່ແອນ້ອຍບໍ່ປາກ ແລະ ຫລຽວເບິ່ງລຸງຄົນນັ້ນ ແລ້ວກໍຫລຽວເບິ່ງແມ່ແບບບໍ່ຄ່ອຍໄວ້ໃຈ ຈາກນັ້ນ ກໍແກວ່ງຫົວ.

"ບໍ່ ຫລານບໍ່ເອົາ ຫລານບໍ່ໄດ້ຮັບອະນຸຍາດຈາກແມ່ ແລະ ຂະຫນົມຂອງຫລານກໍມີແລ້ວຫລານຊິເມືອນໍາແມ່"

"ເອົາເທາະລູກ ຮັບເອົານໍາລຸງ ແລ້ວກໍຂອບໃຈເພິ່ນສາ ຄໍາຣູ ຄໍາຣູ"

ແລະ ຕັ້ງແຕ່ມື້ນັ້ນມາ, ລຸງຄົນນັ້ນ ກໍໄປຮັບແອນ້ອຍ ພ້ອມໆກັບວຽງທອງເປັນປະຈໍາ ແຕ່ແອນ້ອຍກໍຍັງບໍ່ເວົ້າຫຍັງ ກ່ຽວກັບເລື່ອງທີ່ແມ່ສະເຫນີມາ, ແອນ້ອຍກໍຍັງເອີ້ນລຸງ ແລະ ກໍຍັງຫຶງຫວງແມ່ ເຂົາບໍ່ຍອມຫນີປະຂ້າງແມ່, ເມື່ອໃດເຫັນລຸງຄົນນັ້ນມາແອນ້ອຍກໍບໍ່ຍອມເວົ້າຈາ ແລະ ທ່າທາງກໍເສົ້າສ້ອຍງຽບຂຶມ. ເຂົາຢາກມີພໍ່ ແຕ່ເຂົາກໍບໍ່ສາມາດອະນຸຍາດໃຫ້ແມ່ໄປກັບຜູ້ຊາຍຄົນອື່ນໄດ້, ອັນນັ້ນ ອາດເປັນຍ້ອນສັນຊາດຕະຍານ ຫລື ໄວອາຍຸ, ແລະ ນັ້ນອາດແມ່ນຄວາມອ້າເວ່ ແລະ ໂດດດ່ຽວ ປ່ຽວພອຍ ຂອງແອນ້ອຍ ຊີ່ງຕະຫລອດໄລຍະຜ່ານມາ ເຂົາຮູ້ພຽງ

ແຕ່ອ້ອມອົກຂອງຜູ້ເປັນແມ່ເທົ່ານັ້ນ ແລະ ອ້ອມອົກ
ນັ້ນອາດເປັນທັງພໍ່ ແລະ ເປັນທັງແມ່ ແຕ່ເບື້ອງຫນຶ່ງ
ຂອງປະກົດການພາຍນອກ ແອນ້ອຍອາດຢາກມີພໍ່
ເພາະສິ່ງທີ່ນັກຮຽນອະນຸບານເຂົາມີ ແຕ່ແອນ້ອຍບໍ່ມີ.
ດັ່ງນັ້ນ ການຕັດສິນໃຈ ຂອງວຽງທອງ ສ່ວນຫນຶ່ງກໍຂຶ້ນ
ຢູ່ກັບແອນ້ອຍ ສໍາລັບຫົວອົກຂອງຜູ້ເປັນແມ່ ທີ່ຍາມໃດ
ກໍຮັກ ແລະ ອີ່ດູຕົນສົງສານລູກ, ອະນາຄົດອາດເປັນໄປ
ໄດ້ ຖ້າເມື່ອໃດ ແອນ້ອຍຫາກເຂົ້າໃຈວ່າ ເຮັດຄືແນວ
ນັ້ນ ມັນແມ່ນຄວາມເຫັນແກ່ໂຕ ແລະນັ້ນມັນກໍ
ແມ່ນສ່ວນຫນຶ່ງ ຂອງຄວາມຕ້ອງການຂອງຜູ້ເປັນແມ່
ຊຶ່ງບໍ່ຕ່າງຫຍັງກັບ ແອນ້ອຍພ້ອມຕ້ອງການຄວາມ
ອົບອຸ່ນຈາກພໍ່ຄືກັນ ແລະ ທັງຫມົດເຫລົ່ານັ້ນ ມັນກໍ
ແມ່ນຄວາມສຸກທີ່ແທ້ຈິງ ຂອງຄອບຄົວ ຖ້າຫາກ
ມີທັງພໍ່, ແມ່ ແລະ ລູກນໍາ. ດັ່ງນັ້ນ ວຽງທອງຈຶ່ງຄິດວ່າ
ມີແຕ່ການເວລາເທົ່ານັ້ນ ຈະເປັນ ຜູ້ຕັດສິນໄດ້ວ່າ :
ມື້ອື່ນແອນ້ອຍຈະມີພໍ່ໄດ້ຫລືບໍ່ ?

"ເຂົາລັກຈອບ ແນມເບິ່ງນາງພະຍາ ບານຄືນນັ້ນ ໃນຂະນະເວລາທີ່ນາງເຜີຕົວ ແຕ່ຫລາຍເທື່ອ ສາຍຕາສອງຄູ່ ກໍປະສານກັນ ແບບບັງເອີນ ແລະສິ່ງເຫລົ່ານັ້ນ ກໍກາຍເປັນ ສື່ສຳພັນທາງໃຈ ທີ່ເຮັດໃຫ້ ພາບພິດໃນມື້ນັ້ນ ຕິດຕາ ແລະ ຝັງໃຈມາຈົນເຖິງມື້ນີ້ ມື້ທີ່ 24 ປີ ຜ່ານໄປ ..."

# ຄູ່ຊີວິດໃນຄວາມມືດ

ເມື່ອຄົນໆໜຶ່ງມີລົມຫາຍໃຈ ມີຄົນເອົາໃຈໃສ່ຫ່ວງໃຍ ແລະ ບົວລະບັດຮັກສາຈາກຄົນອ້ອມຂ້າງ ແລະເກືອບວ່າມີທຸກຢ່າງ ຊຶ່ງຄົນອື່ນບາງຄົນບໍ່ທັນມີ ແຕ່ຄົນໆນີ້ ກະຍັງບໍ່ມີສຳລັບອັນທີ່ເຂົາຢາກມີ ແລະ ສິ່ງນີ້ກະຄືຄວາມສະຫວ່າງຈາກໜ່ວຍຕາສອງເບື້ອງ ຊຶ່ງເຂົາຕ້ອງຈົມຢູ່ໃນຄວາມມືດຫລັບໄຫລ ຕະຫລອດ 24 ປີ ແລະ ມາບັດນີ້ເຂົາຍັງບໍ່ຮູ້ຊ້ຳວ່າ ໜ້າຕາລູກໆແຕ່ລະຄົນເປັນຄືແນວໃດ ແຕ່ສຳລັບຜູ້ເປັນເມຍເຂົາຍັງຄິດສະເໝີວ່າ ປະຈຸບັນນາງກະຍັງແມ່ນນາງສາວພະຍາບານຄົນໜຶ່ງ ທີ່ມີໜ້າຕາດີ

ນີສະເໜ່ໜ້າຮັກ ຊຶ່ງຄັ້ງໜຶ່ງນາງຄົນນີ້ໄດ້ເຄີຍເປັນເປົ້າສາຍຕາໃຫ້ແກ່ພົນທະຫານຄົນໜຶ່ງ ທີ່ຫາກໍ່ກັບຈາກແນວໜ້າໃນຖຸຮອລິດພະຍາບານ ທີ່ໄປນຳເອົາຄົນເຈັບ. ເອົາລັກຈອບ ແນມເບິ່ງນາງໃນຂະນະເວລາທີ່ນາງເຜີຕົວ ແຕ່ຫລາຍເທື່ອສາຍຕາສອງຄູ່ກໍປະສານກັນ ແບບບັງເອີນ ແລະສິ່ງເຫລົ່ານັ້ນກໍກາຍເປັນສີ່ສຳພັນທາງໃຈ ທີ່ເຮັດໃຫ້ພາບພົດໃນມື້ນັ້ນຕິດຕາ ແລະ ຝັງໃຈມາຈົນເຖິງມື້ນີ້ ມື້ທີ່ 24 ປີ ຜ່ານໄປ ...

ການເວລາ ປຽບດັ່ງສາຍນ້ຳທີ່ບໍ່ມີຍາມໄຫລກັບສັນໃດ ອາຍຸໄຂຂອງຄົນເມື່ອມີເກີດ ກໍຕ້ອງມີຕາຍມີເຍົາໄວກໍຕ້ອງມີແກ່ເຖົ້າຊະລາການສັນນັ້ນ ... ນະທີ່ບ້ານຈັດສັນຂອງສູນຄົນພິການ ກອງ 790 ທ່າງອນ, ຜູ້ຊາຍຄົນໜຶ່ງນັ່ງຢ່ອງຢໍ້ ຄູລີຄູລັງເຮັດຫັ້ນເຮັດນີ້ກັບໜານຜັກກາດທີ່ຍາວຢຽດ ເປັນຖັນລຽນຊ້າຍລ້າຍຄືແຖວທະຫານໃນເວລາຕາເວັນບ່າຍຄ້ອຍ ຈວນຈະລາລັບອັບແສງນັ້ນ

ໄດ້ມີ ສຽງໆໜຶ່ງດັງອອກມາຈາກໃນເຮືອນຫລັງໜຶ່ງວ່າ :

" ພໍ່ໃບເອີຍ ປະໃຫ້ລູກເຮັດກະໄດດອກຂອງໜູນັ້ນມາ ຂ້ຽວໄປອາບນ້ຳອາບທ່າແລ້ວກໍມາກິນເຂົ້າສາ ". ຜູ້ຖືກເອີ້ນຍັງນັ່ງປີ້ນຫລັງ ເຮັດວຽກຄືຫູບໍ່ໄດ້ຍິນ.

" ອີພໍ່ ປະໄວ້ທັ້ນແຫລະ ຈັກໜ້ອຍລູກຊິໄປເຮັດດອກ ". ລູກສາວອາຍຸໄວ 14 ປີ ທີ່ພວມເກືອໝູຢູ່ຄອກຮ້ອງມາໃສ່ຜູ້ເປັນພໍ່.

" ອ້າວ ໃຜເຮັດກະໄດຕົວອັນຂອງໜູນີ້ ຊິລຳລີລຳໄລອີສັງຫລາຍແທ້ຊຸມໂຕກະດາຍ ວຽກສ່ຳນີ້ບໍ່ແມ່ນວ່າຊິບໍ່ເຄີຍເຮັດ ." ປະໂຫຍກຄຳເວົ້າທີ່ໂຕ້ຕອບກັບເຮັດໃຫ້ໜິດທຸກຄົນມິດບໍ່ຕໍ່ຄວາມ ແລ້ວຕ່າງຄົນກໍຕ່າງ ເຮັດວຽກຂອງໃຜລາວ. ຄວາມຄ່ຳມືດຈຶດຕາໄດ້ຄ່ອຍໆຄືບຄານເຂົ້າມາຜູ້ຊາຍຄົນນັ້ນຍັງໃສ່ແວ່ນຕາດຳ ແລະ ຄວາຈັບເອົາໄມ້ຄ້ອນເທົ້າຄູ່ຊີບຄ້ຳກາຍລຸກຂຶ້ນ ແລ້ວທົ່ງໆປາຍໄມ້ເທົ້າໃສ່ດິນ ເພື່ອຊອກທາງ ແລະ ມຸ່ງໜ້າໄປຫາບ່ອນອາບນ້ຳ. ທຸກການເຄື່ອນໄຫວໄປມາ ເກືອບວ່າຮ້ອຍສ່ວຍຮ້ອຍ

ທີ່ເຂົາສາມາດຊ່ວຍເຫລືອຕົນເອງ ຈົນກະທັ້ງອາບນ້ຳອາບທ່າ, ໄປມາ, ສານແຫແຊ່ນອງ ເຮັດໄດ້ດີ ແລະລະອຽດກວ່າ ຄົນຕາດີບາງຄົນຊ້ຳ ດັ່ງນັ້ນ, ຈຶ່ງບໍ່ເປັນທີ່ ລຳບາກຍາກໃຈ ອັນໃດໃຫ້ແກ່ຄອບຄົວລູກເມຍ ແລະ ຕ່າງຄົນກໍຕ່າງ ຊ່ວຍຕົນເອງເທົ່າທີ່ຊ່ວຍໄດ້ ແລະ ຄອບຄົວນີ້ກໍຢູ່ກິນກັນ ມາຢ່າງມີຄວາມສຸກ. ເມື່ອອາບນ້ຳອາບທ່ານຸ່ງເຄື່ອງ ເປັນທີ່ຮຽບຮ້ອຍແລ້ວ ຜູ້ເປັນເມຍກໍເວົ້າຂຶ້ນວ່າ :

" ພໍ່ໃບ ພໍ່ສຽວສີທາມາຢາມ ".

" ສີທາໃດ ".

" ສີທາລາດຮ້ວງພັ້ນເດ ກະດຽວວ່າພວກອ້າຍ ກະເຄີຍສັງກັດກອງດຽວກັນ ບໍ່ແມ່ນຫວະ ".

" ສີທາລາດຮ້ວງ ". ຜູ້ກ່ຽວມິດຊຶງພວມຄິດ ຫາຄວາມຈື່ຈຳ ບໍ່ພໍຄາວກໍເວົ້າຂຶ້ນວ່າ : " ເອີ ບັກສີທາ ສີທາຜົວອີບົວຜັນພັ້ນຕິວນ່າ ".

" ເອີ ໆ ສີທານັ້ນແຫລະ ". ພໍດີເວົ້າສຸດຄວາມ ຜູ້ເປັນແຂກທີ່ມີຊື່ວ່າສີທາກໍລຸກຂຶ້ນ ຍ່າງເຂົ້າມາຈັບແຂນ

ເຈົ້າຂອງເຮືອນ ແລ້ວເວົ້າວ່າ :

" ສ່ຽວ ບັກສ່ຽວສີພັນ ມຶງສະບາຍດີເບາະ ".

ທັງສອງສ່ຽວຫລຽວເບິ່ງກັນໜ້າເຊິ່ງໜ້າ ດ້ວຍຄວາມຕື່ນເຕັ້ນດີໃຈ ແຕ່ຄົນທີ່ມີຊື່ວ່າ ສີພັນໄດ້ຍົກຝາມືຂຶ້ນລູບຄຳໃບໜ້າຂອງສີຫາຄ່ອຍໆ ແລ້ວກະລູບລົງມາຍັງບ່າ ແລະເນື້ອກາຍ.

" ສ່ຽວເອີຍ ໂຕກະເຖົ້າກະແກ່ປານນີ້ພຸ້ນຫວະ ວ່າແຕ່ໄປຈັ່ງໃດມາຈັ່ງໃດ ຈຶ່ງມາເຖິງ ເຮືອນເຖິງຊານ ບໍ່ແມ່ນເກືອບ 20 ປີແລ້ວບໍ ທີ່ພວກເຮົາບໍ່ໄດ້ພົບກັນ ".

" ເອີ ກະແຕ່ພຸ້ນແຫລະ ແຕ່ເຊັນສັນຍາສະຫງົບເສິກ 1973ເຮົາກໍຖືກຍົກຍ້າຍກົມກອງ ແລ້ວບັນຈຸເຂົ້າເປັນກຳລັງປະສົມ ປ້ອງກັນນະຄອນຫລວງວຽງຈັນ ".

ພາຍຫລັງທີ່ ຖາມຂ່າວສຸກທຸກຊຶ່ງກັນແລະກັນແລ້ວແຂກທີ່ມາເຖິງກໍຖືກຕ້ອນຮັບຢ່າງອົບອຸ່ນ ປຽບດັ່ງອ້າຍ

ນ້ອງຮ່ວມສາຍເລືອດ ທີ່ໄດ້ພັດພາກຈາກກັນໄປດົນນານ ແລ້ວທວນກັບຄືນມາພົບກັນອີກເທື່ອໃຫມ່. ຄາບເຂົ້າແລງມື້ນັ້ນແຊບນົວເປັນພິເສດ ທັງກິນທັງເວົ້າລົມ ບາງຄັ້ງກໍເລົ່າເລື່ອງ ທີ່ຍັງເປັນທະຫານໃນສະໄຫມສົງຄາມຕໍ່ສູ້ກູ້ຊາດ ສີພົນ ປະກົດວ່າ ມື້ນີ້ດື່ມເຫລົ້າບໍ່ເມົາ ຕ່າງຄົນກໍຕ່າງຍາດເວົ້າ ແລ້ວສຽງຫົວກໍຕິດຕາມມາ ສີຫາເວົ້າວ່າ : ປະຈຸບັນຕົນເອງກໍອອກກິນເບ້ຍບໍານານ ແລະ ໄດ້ຮັບທີ່ດິນແບ່ງປັນຈາກຂັ້ນເທິງຫນຶ່ງຕອນ ສາມາດປຸກເຮືອນໄດ້ຫນຶ່ງຫລັງ ແລະເຮັດສວນໄດ້ອີກ ລູກເຕົ້າກໍໃຫຍ່ສູງອອກເຮືອນອອກຊານຫມົດແລ້ວ ຍັງເຫລືອກໍແຕ່ສອງເຂີຍເຖົ້າເຝົ້າເຮືອນ.

ຄືນນັ້ນ ແມ່ເຈົ້າເຮືອນປ່ອຍໃຫ້ສອງສຽວນອນລົມກັນໃນຫ້ອງພັກຮັບແຂກ ແລະ ໃນຍາມລາຕີການທີ່ມືດມິດມີແຕ່ສາຍລົມຫນາວພັດຜ່ານນັ້ນ ໄດ້ເຮັດໃຫ້ຕົ້ນໄມ້

ໃບໜ້າສັ່ນເຫນັງເອນອຽງ ຄືການແອ່ນຟ້ອນຂອງນາງລະບໍາ ແຕ່ອີກນຸ່ມໜຶ່ງ ຍັງມີສຽງອຸ່ມອື່ມເວົ້າລົມບາດຄ່ອຍບາດແຮງ ດັງແວ່ວອອກມາຈາກຂ້າງໃນ ແລະ ມີຕອນໜຶ່ງສິພັບໄດ້ເວົ້າວ່າ :

" ຕອນນັ້ນ, ໜ່ວຍປ້ອງກັນລົດພະຍາບານ ທີ່ລໍາລຽງລົບເຈັບຈາກແນວໜ້າຄືນແນວຫລັງ ເຮັດໃຫ້ເຮົາພົບກັບແມ່ເດັກນ້ອຍສູ້ມື້ນີ້ ຢູ່ໃນລົດລັບດຽວກັນ ຕອນພົບເຫັນຄັ້ງທໍາອິດກໍຄິດນັກ ແລະ ຮູ້ສຶກວ່າ ໃນຕົວຂອງນາງໄດ້ມີອັນໃດອັນໜຶ່ງມາເປັນແຮງກະຕຸກຊຸກຍູ້ໃຫ້ເຮົາມີຄວາມກ້າຫານ, ມີຄວາມອົບອຸ່ນ ແລະ ມີກໍາລັງໃຈໃນການເຮັດໜ້າທີ່ສູ້ຮົບ ສະເພາະເຮົາແລ້ວ ຕັ້ງແຕ່ມື້ນັ້ນມາກໍປາຖະໜາຢາກມີໂອກາດໃຫ້ໄດ້ໄປເຮັດວຽກຢູ່ໃກ້ໆກັບນາງ ແຕ່ຫາກວ່າໂຊກບໍ່ເຂົ້າຂ້າງ ນັບແຕ່ມື້ນັ້ນມາມື້ທີ່ເຮົາພົບນາງຢູ່ໃນລົດ ເຮົາກໍບໍ່ມີໂອກາດໄດ້ເຫັນໃບໜ້າຂອງນາງຄືນນັ້ນອີກ ເພາະເຮົາຖືກມອບໝາຍໃຫ້ຂຶ້ນໄປເປັນກໍາລັງໜູນຢູ່ແນວໜ້າ ແລະ ເທື່ອນັ້ນແຫລະ

ເຮົາກໍຖືກບາດເຈັບສາຫັດ ຍ້ອນສະເກັດລະເບີດຂອງສັດຕູ ຈົນແກ່ນຕາສອງເບື້ອງແຕກມຸ່ນ ແພດຫມໍກໍຊ່ວຍຈົນສຸດຄວາມສາມາດ ແຕ່ກໍ່ບໍ່ມີຫົນທາງໃດທີ່ຈະເຮັດໃຫ້ເຮົາແນມເຫັນໄດ້ຄືເມື່ອກ່ອນ ຍັ້ນຕົ້ນເຮົາຄິດວ່າຕາຍດີກວ່າທີ່ຈະມີຊີວິດແບບມືດບອດ ທໍລະມານຄືແນວນີ້ຕະຫລອດໄປ ເຮົາໂສກເສົ້າຫງ່ອມເຫງົາບໍ່ຄິດຢາກກິນເຂົ້າກິນນ້ຳ ແລະບາງເທື່ອກໍຄິດຢາກຂ້າໂຕຕາຍ ແລະ ເວລາທີ່ເຈັບປວດທີ່ສຸດນັ້ນ ກໍຄືຕອນທີ່ນາງພະຍາບານສາວຄົນນັ້ນມາຢ້ຽມຢາມ ຖ້າເຮົາຫລີກໄດ້ເຮົາຢາກຫນີໄປໄກໆ ເພາະບໍ່ຢາກໃຫ້ນາງມາເຫັນ ສະພາບຂອງຕົນເອງຄືແນວນັ້ນ ຍິ່ງຄິດເທົ່າໃດ ຄວາມໂສກເສົ້າເສຍໃຈກໍເພີ່ມທະວີຄູນ ການຈັດຕັ້ງຫມູ່ຄູ່ໃຜໆກໍມາລະດົມໃຫ້ກຳລັງໃຈ ແຕ່ກໍຊ່ວຍຫຍັງເຮົາບໍ່ໄດ້ ໂຕຮູ້ບໍ່ວ່າເວລາເຮົາຍັງຢູ່ໂຮງຫມໍ ສະພາບຂອງເຮົາເປັນຄືແນວໃດ ເຮົາຮ້ອງໄຫ້ຟຸມຟາຍນ້ຳຕາ ຄືເດັກນ້ອຍບໍ່ຮູ້ຈັກຄວາມ ຍ້ອນຢາກເຫັນແສງສະຫວ່າງ, ຢາກເຫັນທ້ອງຟ້າ ແລະ ດວງຕາເວັນ, ຢາກເຫັນຍາມມືດຍາມ

ແຈ້ງລະຫວ່າງນີ້ເວັນ ແລະນີ້ຄືນ ຢາກເຫັນໜ້າ ເພື່ອນມິດສະຫາຍ ແຕ່ເຮົາກໍໄດ້ແຕ່ຫລັບໄຫລຢູ່ໃນ ຄວາມມືດທີ່ບໍ່ມີຍາມສະຫວ່າງແຈ້ງ ນອກຈາກການ ສຳຜັດພາຍນອກ ແລະ ສຽງເວົ້າລົມ ເຮົານອນເອົາ ຜ້າຫົ່ມປົກຫົວ ໃນເວລາມີຄົນມາຢື້ຢາມຖາມຂ່າວ ແລະ ໃນເວລາຕໍ່ມາ ເຮົາກໍໄດ້ຍິນສຽງສຳນຽງເວົ້າຈາທີ່ຄຸ້ນຫູ ຂອງຜູ້ຍິງຄົນໜຶ່ງ ຊຶ່ງຍາມໃດເຮົາກໍຈົດຈຳຢູ່ຕະຫລອດເວລາ ແລະ ກໍແມ່ນນາງເອງທີ່ບົວລະບັດ ຮັກສາຊ່ວຍເຫລືອ ໃນການເຄື່ອນໄຫວໄປມາ ອາບນ້ຳອາບທ່າ ກິນເຂົ້າກິນນ້ຳ ແລະ ເຮັດທຸກຢ່າງຕາມ ກິດຈະກຳຂອງຄົນຜູ້ໜຶ່ງ ທີ່ມີຄວາມຈຳເປັນ ທີ່ຈະຕ້ອງເຄື່ອນໄຫວໃນແຕ່ລະວັນ ນາງໄດ້ປອບຂວັນ ໃຫ້ກຳລັງໃຈ ບາງເທື່ອກໍອ່ານປຶ້ມເລື່ອງ ເລົ່າຂ່າວຄາວກ່ຽວກັບການສູ້ຣົບຢູ່ທາງແນວໜ້າ ແລະ ເວົ້າຈາຢອກໄຍ ທັງເອົາໃຈທຸກຢ່າງ ແມ່ນກະທັ່ງນາງຄັ່ງ ກໍຮ້ອງເພງໃຫ້ຟັງ ແລະ ນັບແຕ່ນັ້ນເປັນຕົ້ນມາ ເຮົາກໍຄ່ອຍໆ ລືມຄວາມໂສກເສົ້າເສຍກຳລັງໃຈນັ້ນ ເທື່ອລະເລັກລະ

ໜ້ອຍ ເຮົາຮູ້ສຶກອົບອຸ່ນເມື່ອມີນາງ ມານັ່ງຢູ່ຄຽງຂ້າງ ແຕ່ອັນທີ່ໜ້າສັນລະເສີນທີ່ສຸດກໍຄື ນາງສາມາດຕັດສິນໃຈແຕ່ງງານກັບຄົນຕາບອດສອງເບື້ອງ ຕາມທີ່ການຈັດຕັ້ງຖາມຄວາມສະໝັກໃຈ ແລະ ນາງກໍໄດ້ເຮັດໜ້າທີ່ເປັນເມຍທີ່ດີຕະຫລອດມາ ນາງເປັນຄູ່ເວົ້າສົນທະນາ ເປັນທັງຜູ້ອຸປະກາລະຊ່ວຍເຫລືອເບິ່ງແຍງ ແລະ ແບ່ງເບົາຄວາມທຸກໂສກ ນາງໄດ້ເປັນແມ່ຂອງລູກ ແລະ ເປັນທັງຄູ່ຊີວິດ ແລະ ແຕ່ນີ້ນັບມາເຖິງມື້ນີ້ ນີ້ທີ່ 24 ປີຜ່ານໄປ ນາງໄດ້ເປັນທັງພໍ່ ເປັນທັງແມ່ ແລະ ຫົວໜ້າຄອບຄົວທີ່ດີ ພວກເຮົາມີລູກນໍາກັນ 8 ຄົນ ແຕ່ລະຄົນກໍໄດ້ຮໍ່າໄດ້ຮຽນໝົດ ສໍາລັບຕົວເຮົາເອງ ກໍບໍ່ແມ່ນແຕ່ຈະນັ່ງຢູ່ນອນກິນ ເອົາຕີນຊີ້ມືໃຊ້ ອັນໃດເຮັດໄດ້ເຮົາກໍຝຶກແອບເຮັດ ຕະຫລອດຮອດການສານແຫ, ແຊນອງ ສານກະຕ່າກະບຸງ ໃສ່ເບັດ ໃສ່ເຮືອທໍາອິດກະແມ່ນເມຍພາເຮັດພາໄປ ຕໍ່ມາກະແມ່ນລູກ ແລະເຮັດຫລາຍໆເທື່ອ ກໍໄປເອງເຮັດເອງ ສວນຫລັງບ້ານກໍເກືອບວ່າເຮັດເອົາເອງໝົດ ຍາກແດ່ກໍແຕ່ເລືອກແນວ

ຜັກເທົ່ານັ້ນແຫລະ ". ສີພັນເລົ່າມາຮອດນີ້ ສີທາທີ່ເປັນຝ່າຍຟັງກໍຕັ້ງຄຳຖາມຕັດຄວາມວ່າ :

" ຈັ່ງຊັ້ນ ຢູ່ນຳກັນມາ ກະມີຢູ່ທວະກໍລະນີຮ້າຍດ່າວ່າຕິຈົນມີເລື່ອງມີລາວ ໃຫ້ການຈັດຕັ້ງບ້ານເມືອງມາອົບຮົມແກ້ໄຂ ".

" ໂອ ອັນເວົ້າເລື່ອງຮ້າຍເລື່ອງດ່າໃຜໆກະມີ ຄັນວ່າບໍ່ມີມັນກະບໍ່ຖືກ ກໍມີເປັນບາງຄັ້ງບາງຄາວ ແນວວ່າຄົນຕາບອດເສຍອົງຄະ ບາງເທື່ອຄົນອື່ນເຮັດບໍ່ທ່ວງບໍ່ທັນຕາມໃຈໂຕ ກະຄິດຢາກຮ້າຍ ເຊັ່ນວ່າຍາມຢາກກິນເຂົ້າ ພັດບໍ່ທັນໄດ້ກິນ ແຕ່ກະບໍ່ມີໃຜຊາ ເວົ້າແລ້ວ ກະແລ້ວໄປແມ່ນບໍ່ໂຕວ່າ ເວົ້າມາຮອດບ່ອນນີ້ ສອງສຽວຫົວຂຶ້ນພ້ອມໆກັນ ແລະຕໍ່ຈາກນັ້ນ ແສງສະຫວ່າງຈາກດອກໄຟ ກໍດັບວູບລົງ ແລະ ຄວາມມືດດຳກຳຕາກໍເຂົ້າມາແທນ ທຸກສິ່ງທຸກຢ່າງ ກໍຈົມປົ່ງຢູ່ໃນຄວາມຫລັບໄຫລໃນລາຕີການ ທີ່ເຢັນຈ້ອຍເຂົ້າສູ່ຂື້ອຫົວໃຈ ນະທີ່ບ້ານພັກຂອງຄົນພິການ.

" ຕອນເຮືອບິນ ແລ່ນຂຶ້ນສູ່ທ້ອງຟ້າ ຂ້ອຍເກືອບຈະເປັນລົມ ຂ້ອຍຮູ້ວ່າ 6 ປີ ສໍາລັບ ການລໍຄອຍແລ້ວ ມັນຄືນເຫມືອນ 60 ປີ ... "

# ປື້ມບັນທຶກສີຟ້າ

ກ່ອນຈະເລີກຈາກວຽກ, ແລ້ວກັບຄືນມາເຖິງຫ້ອງພັກໃນໂຮງແຮມ, ຂ້ອຍກໍອິດເມື່ອຍ ຫາຍໃຈບໍ່ຮອດທ້ອງແລ້ວ, ບໍ່ຄິດເລີຍວ່າການເດີນທາງມາເຮັດວຽກເທື່ອນີ້ ເຖິງຈະແມ່ນນີ້ທຳອິດ ແຕ່ປາກົດວ່າວຽກຫລາຍ ຈົນບໍ່ມີເວລາໄດ້ພັກຜ່ອນເລີຍ. ຂ້ອຍເອນກາຍລົງນອນເທິງຕຽງ ແນມເບິ່ງທ້ອງເພດານ ແລ້ວຖອນຫາຍໃຈບາດຍາວໆ ... " ເປັນຫຍັງຂ້ອຍຈຶ່ງຕ້ອງເຮັດວຽກງານຄືແນວນີ້ ". ຂ້ອຍຕັ້ງຄຳຖາມຄືແນວນັ້ນ ໃນສ່ວນສຳນຶກ ແລ້ວຫລາຍໆຄຳຖາມກໍຊ້ອນໆຂຶ້ນມາ.

" ຂ້ອຍມີເວລາໃຫ້ຄອບຄົວບໍ່ເຖິງສິບວັນ ໃນແຕ່ລະເດືອນ ສ່ວນຫລາຍຂ້ອຍຈະມີເວລາຢູ່ກັບວຽກ ທີ່ຕ່າງແຂວງ ບາງເດືອນກໍແມ່ນພາກເຫນືອ, ບາງເທື່ອກໍແມ່ນພາກກາງ ແລະກໍພາກໃຕ້ ຊີວິດນີ້ມີແຕ່ໄປກັບໄປ ແລະ ວັນເວລາ ກໍຢູ່ກັບການເດີນທາງ ... ຂ້ອຍບໍ່ຮູ້ວ່າ ວຽກງານຄືແນວນີ້ ຂ້ອຍເຮັດຖືກແລ້ວຫລືບໍ່ ".

ຂ້ອຍລຸກຂຶ້ນ ແລ້ວຍ່າງໄປໄຂປະຕູຫລັງຫ້ອງນອນ ມີລະບຽງຍື່ນອອກໄປ, ຂ້ອຍຢືນຈັບຮາວພະນັກ ແລ້ວສົ່ງສາຍຕາແນມໄປສູ່ເບື້ອງນອກ ເຫັນຕົວເມືອງຫລວງພະບາງ ໃນຍາມຄ່ຳຄືນ, ບາງບ່ອນຍັງມີແສງໄຟ ແຕ່ແນມໄກ ອອກໄປກໍມີແຕ່ຄວາມມືດຄຶ້ມດຳຂຽວ ຂອງພູເຂົາ ທີ່ອ້ອມຮອບ, ຂ້ອຍສູບລົມຫາຍໃຈເຂົ້າປອດບາດຍາວໆ ແລ້ວຫັນຫລັງໃຫ້ກັບສິ່ງເຫລົ່ານັ້ນ. ຂ້ອຍຄ່ອຍໆໂຍບກາຍ ລົງນັ່ງເທິງເກົ້າອີ້ຂ້າງຕຽງນອນ ແລ້ວສອງແນມເບິ່ງ ພາບຕົນເອງ ທີ່ສະທ້ອນຈາກເງົາແວ່ນ, ຂ້ອຍຍົກມືຂຶ້ນມາ

ລູບໜວດຕົນເອງທີ່ປົ່ງຊອນຂຶ້ນ ຈົນຮູ້ສຶກລໍາຄານ. ຂ້ອຍດຶງກະເປົາເດີນທາງ ທີ່ເມຍກຽມໃຫ້ອອກມາ ແລະ ໃນກະເປົານັ້ນ ຂ້ອຍໄດ້ພົບສິ່ງໜຶ່ງທີ່ປົນມານໍາເສື້ອຜ້າ ...

" ປຶ້ມບັນທຶກສີຟ້າ ! " ຂ້ອຍອຸທານຄ່ອຍໆ ... ຂ້ອຍຟ້າວຈັບມັນຂຶ້ນມາ ແລ້ວເປີດອ່ານໃນໜ້າເຈ້ຍໃບທໍາອິດ ອັນມີເນື້ອໃນວ່າ :

- ວັນທີ 11 ກັນຍາ 1984.

ມື້ນີ້ ຜົວຂ້ອຍອອກເດີນທາງໄປຮຽນຕໍ່ ທີ່ປະເທດລັດເຊຍ ເປັນເວລາ 6 ປີ. ຂ້ອຍ ແລະ ລູກ 3 ຄົນ ອອກໄປສົ່ງທີ່ສະໜາມບິນວັດໄຕ ຂ້ອຍມອບຊໍ່ດອກໄມ້ໃຫ້ອ້າຍຄໍາພັນ ແລ້ວລາວກໍເຂົ້າໄປໃນຫ້ອງພັກຜູ້ໂດຍສານ. ຂ້ອຍ ແລະ ລູກໆ ຟ້າວແລ່ນຂຶ້ນເມືອເທິງຊັ້ນສອງ ຢືນແນມຢູ່ລະບຽງ, ຂ້ອຍອູ້ມລູກຜູ້ນ້ອຍກ່ອນໝູ່ຍົກຂຶ້ນ ເພາະລູກຢັ້ງເບິ່ງບໍ່ເຫັນພໍ່ ... ຂ້ອຍຄິດວ່າຈະບໍ່ຮ້ອງໄຫ້ ແຕ່ກໍອົດບໍ່ໄດ້ ເພາະລູກໆພາຂ້ອຍໄຫ້. ນັ້ນມັນແມ່ນນາທີລະທຶກໃຈ, ຊຶ່ງຕະຫລອດຊີວິດຜ່ານມາ ຂ້ອຍບໍ່ເຄີຍຄ້ອຍໃຈ

ຄືເທື່ອນີ້ ... ອ້າຍຄຳພັນ ຫັນຫລັງກັບຄືນມາ ແລ້ວໂບກມື ໃຫ້ອ້ອຍ ແລະ ລູກໆ, ເວລານີ້ແຫລະ ອ້ອຍຈຶ່ງສັງເກດເຫັນ ອ້າຍຄຳພັນຈ່ອຍ ... ຈ່ອຍຈົນແກ້ມຕອບ ...

ຕອນເຮືອບິນແລ່ນຂຶ້ນສູ່ທ້ອງຟ້າ ອ້ອຍເກືອບຈະເປັນລົມ ອ້ອຍຮູ້ວ່າ 6 ປີ ສຳລັບການລໍຄອຍແລ້ວ ມັນເໝືອນ 60 ປີ ...

ຄືນນີ້ ອ້ອຍເຫັນຫ້ອງເຮືອນເຮົາເວີ້ງວ້າງ ຄືບໍ່ມີຄົນ, ອ້ອຍກິນເຂົ້າບໍ່ລົງ, ນອນບໍ່ຫລັບ, ແຕ່ເມື່ອຄິດເຖິງອ້າຍຄຳພັນຍາມໃດ ອ້ອຍກໍມີແຕ່ນ້ຳຕາໄຫລ ບາງເທື່ອສຽງສະອື້ນໄຫ້ນັ້ນ ກໍດັງລອດອອກມາຈົນລືມຕົວ ຈົນລູກໆຕື່ນແລ້ວຫມົບຫົວເຂົ້າມານອນໃສ່ອ້ອມອົກອ້ອຍ, ສາມຫົວສາມໃບຫນ້າ ແລະ 6 ຫນ່ວຍຕາ ອ້ອຍບໍ່ຮູ້ວ່າເວລານີ້ອ້າຍຄຳພັນ ຈະຄິດເຖິງລູກຫລືບໍ່ນໍ ... ມື້ນີ້ ອ້ອຍຕ້ອງໂຈະການບັນທຶກໄວ້ສ່ຳນີ້ກ່ອນ ເພາະເດິກດື່ນຈົນອ້ອນຄືນແລ້ວ.

- ວັນທີ 25 ກັນຍາ 1984.

ຂ້ອຍໄດ້ຮັບຈົດໝາຍສະບັບທຳອິດ ຂອງອ້າຍຄຳພັນ, ຂ້ອຍຮ້ອງໄຫ້ ຍ້ອນຄວາມດີໃຈ ແລະ ຈົດໝາຍສະບັບນັ້ນ, ປະກົດວ່າ ມັນມີຄ່າມະຫາສານສຳລັບຂ້ອຍ, ຂ້ອຍບັນຈົງອ່ານເນື້ອໃນຈົດໝາຍສະບັບນັ້ນໄປ ແຕ່ລະຕົວໜັງສື. ທັງອ່ານທັງຮ້ອງໄຫ້, ຢາດນ້ຳຕາແຕ່ລະເມັດ ຄ້າຍຄືວ່າຂ້ອຍເຈດຕະນາໃຫ້ມັນຢາດລົງໃສ່ກະດາດຈົດໝາຍ. ຂ້ອຍດີໃຈທີ່ຮູ້ວ່າ ອ້າຍຄຳພັນໄປເຖິງທີ່ໝາຍຢ່າງປອດໄພ ແລະເລີ່ມເຂົ້າຮຽນໜັງສືແລ້ວ.

- ວັນທີ 5 ຕຸລາ 1984.

ຂ້ອຍໄດ້ຮັບຈົດໝາຍຂອງອ້າຍຄຳພັນ ພາບດຽວສິບສະບັບ ຂ້ອຍດີໃຈ ແລະ ໝົກໝຸ້ນຢູ່ກັບ ການອ່ານຈົດໝາຍ ຈົນລືມຢາກນອນ ອ້າຍຄຳພັນເວົ້າວ່າ " ອ້າຍຄິດຮອດລູກ ແລະ ເມຍຈົນໃຈຈະຂາດ, ການຮຽນພາສາເພີ່ນກໍຍາກບໍ່ທຳມະດາ, ແຕ່ລະຄືນກ່ອນຈະໄດ້ນອນກໍເລີຍ

ໄປຮອດໜຶ່ງໂມງກາງຄືນ. ແຕ່ກ່ອນຈະເຂົ້ານອນ ກໍຕ້ອງຂຽນຈົດໝາຍ ເພື່ອວ່າມື້ອື່ນເຊົ້າຈະໄດ້ມີແນວ ໄປປ່ອນຕູ້ໄປສະນີ ຂ້າງຫໍພັກ ...."

- ວັນທີ 20 ພະຈິກ 1984.

ມາຮອດມື້ນີ້ແລ້ວ ຂ້ອຍໄດ້ຮັບຈົດໝາຍອ້າຍຄຳພັນ ທັງໝົດ 40 ສະບັບແລ້ວ. ຂ້ອຍດີໃຈທີ່ອ້າຍຄຳພັນ ດຸໝັ່ນສົ່ງຂ່າວຄາວຫາຄອບຄົວຄືແນວນີ້, ແຕ່ມາຮອດ ມື້ນີ້ກໍບໍ່ແມ່ນຂ້ອຍຈະນອນຖ້າ ແຕ່ອ່ານຈົດໝາຍ. ຂ້ອຍໄດ້ ເຮັດວຽກຫລາຍຂຶ້ນ 2 ເທົ່າ ບໍ່ຈັກວຽກອັນໃດຕໍ່ອັນໃດ ແມ່ນຂ້ອຍຮັບພາລະພຽງຄົນດຽວ. ແຕ່ຂ້ອຍຮູ້ວ່າວຽກ ໃຫຍ່ໆ ທີ່ຂ້ອຍເຮັດແທນອ້າຍຄຳພັນໄດ້ ກໍຄືເອົານໍ້າ ປະປາເຂົ້າເຮືອນ, ສ້ອມແປງເຮືອນທີ່ເປ່ເພຫລັງລະດູຝົນ ແລະ ກ່ຽວເຂົ້າມາຈົນແລ້ວ ແລະ ສິ່ງເຫລົ່ານີ້ ກໍແມ່ນ ຜົນງານໜຶ່ງທີ່ຂ້ອຍເຮັດໄວ້ຖ້າອ້າຍຄຳພັນ.

- ວັນທີ 7 ກຸມພາ 1985.

ຂ້ອຍທຸກໃຈຫລາຍ ເພາະລູກຜູ້ນ້ອຍເປັນໄຂ້ເລືອດອອກ ນອນປິ່ນປົວຢູ່ໂຮງພະຍາບານ. ຂ້ອຍຕ້ອງໄດ້ຫອບລູກທັງຫມົດນອນເຝົ້າກັນຢູ່ກັບໂຮງຫມໍ. ຂ້ອຍຢ້ານ, ຢ້ານວ່າຈະມີຫຍັງເກີດຂຶ້ນກັບລູກ ແລ້ວອ້າຍຄຳພັນຈະຕຳນິຂ້ອຍ, ຂ້ອຍບໍ່ມີຜູ້ທີ່ຈະປຶກສາ ... ແຕ່ຂ້ອຍກໍເຮັດດີທີ່ສຸດແລ້ວ ...

- ວັນທີ 10 ກຸມພາ 1985.

ມື້ນີ້ ຂ້ອຍເກືອບວ່າຊິເປັນບ້າປ່ວງ ເພາະອາການລູກຜູ້ນ້ອຍບໍ່ທັນຫາຍດີ, ລູກຜູ້ກາງກໍລົ້ມປ່ວຍອີກ ... ຂ້ອຍໄດ້ເອົາເຂົ້າຢູ່ເລົ້າໄປຂາຍສອງແສນ ເພື່ອມາເປັນຄ່າຢຸກຢາໃຫ້ລູກ. ແຕ່ເຖິງຢ່າງໃດຂ້ອຍກໍມີກຳລັງໃຈ ຊຶ່ງອ້າຍຄຳພັນສົ່ງຂ່າວມາ ເກືອບວ່າອາທິດຫນຶ່ງບໍ່ຕ່ຳກວ່າ 5 ສະບັບ ... ດີແຕ່ຄ່າຝາກຈົດຫມາຍເພິ່ນຖືກ ຈຶ່ງບໍ່ມີບັນຫາຫຍັງ ທາງດ້ານການເງິນ.

- ວັນທີ 28 ພຶດສະພາ 1985.

ມື້ນີ້ ກໍແມ່ນອີກມື້ໜຶ່ງ ທີ່ຄອບຄົວເຮົາຕ້ອງພົບກັບຄວາມໂສກເສົ້າເສຍໃຈ ເພາະພໍ່ອ້າຍຄຳພັນມາເສຍຊີວິດລົງຢ່າງກະທັນຫັນ, ຂ້ອຍຕ້ອງເປັນເຈົ້າການນັດຮູນມັດສົ່ງສະການ ພີ່ນ້ອງບອກໃຫ້ຂ້ອຍຟ້າວ ສົ່ງຂ່າວຫາອ້າຍຄຳພັນ ແຕ່ເລື່ອງນີ້ ຂ້ອຍບໍ່ຢາກບອກໃຫ້ອ້າຍຄຳພັນຮູ້ເລີຍເພາະວ່າມັນແມ່ນໄລຍະສອບເສັງ ... ຈຶ່ງເປັນອັນວ່າຂ່າວຄາວນີ້ໄດ້ເລື່ອນໄປເກືອບອາທິດໜຶ່ງ ຂ້ອຍຈຶ່ງຂຽນຈົດໝາຍບອກອ້າຍຄຳພັນ.

- ວັນທີ 6 ກັນຍາ 1986.

ນ້ຳຖ້ວມນາຈົນບໍ່ມີຕົ້ນເຂົ້າໃຫ້ເຫັນຜໍຕົ້ນ, ພໍ່ປູ່ກໍບໍ່ມີ, ແມ່ຍ່າກໍເຈັບອອດໆ ແອດໆ, ລູກໆກໍຍັງນ້ອຍ ຊ່ວຍຫຍັງບໍ່ໄດ້, ເລື່ອງທັງໝົດ ກະຍັງແມ່ນໜ້າທີ່ຂອງຂ້ອຍຄືເກົ່າ, ມາຮອດມື້ນີ້ ແທນທີ່ຂ້ອຍຊິທົດທານທົວໃຈໄດ້ ແຕ່ປະກົດວ່ານານເທົ່າໃດ ຂ້ອຍກໍຍິ່ງຄິດຮອດ ແລະ ເປັນຫ່ວງອ້າຍ

ຄຳພັນເທົ່ານັ້ນ, ຄິດນຳການຮຽນແດ່, ສຸຂະພາບແດ່ ... ແຕ່ບາງຄັ້ງກໍນ້ອຍໃຈ ເພາະບາງຄົນມັກຊ່າກັນວ່າ ຜູ້ຊາຍໄປຕ່າງປະເທດມັກຊອກຫາແຕ່ຊູ້ຊາງເຜືອກ ... ບັນຫານີ້ແຫລະທີ່ເຮັດໃຫ້ຂ້ອຍຄິດຫລາຍກວ່າບັນຫາອື່ນ, ແຕ່ຂ້ອຍກໍບໍ່ແປກໃຈດອກ ເພາະຂ່າວຄາວຈາກອ້າຍຄຳພັນ ຂ້ອຍກໍໄດ້ຮັບເປັນປົກກະຕິຕະຫລອດມາ ...

- ວັນທີ 15 ກຸມພາ 1987

ຄອບຄົວຂ້ອຍຍາມນີ້ ຄ້າຍຄືມີແນວກັນແກ້ງ. ປູ່ເສຍບໍ່ນານ, ຍ່າກໍມາເສຍອີກ, ລູກຜູ້ກົກກໍລົ້ມປ່ວຍ ... ການເກັບກ່ຽວກໍບໍ່ໄດ້, ຂ້ອຍຕ້ອງໄດ້ເຮັດວຽກຢ່າງໜັກໜ່ວງ ເພີ່ມຂຶ້ນຈາກເດີມຫລາຍເທົ່າ. ຢືນຂາຍເຄື່ອງແຕ່ເຊົ້າເທົ່າຄ່ຳ ແລ້ວຍາມຄ່ຳມາ ຍັງເອົາເສື້ອຜ້າມາຫຍິບ, ກ່ອນຈະໄດ້ເຂົ້ານອນກໍລ່ວງເລີຍໄປເຖິງທ່ຽງຄືນ. ປ້າບົວສີມາບອກໃຫ້ຂ້ອຍວ່າ :

" ແມ່ແອເອີຍ ... ຜູ້ຍິງຄົນດຽວຮັບພາລະໜັກ

ທັງຄອບຄົວແບບນີ້ ມັນຊິບໍ່ຫນັກຫນ່ວງໂພດບໍ ... ປ້າຄິດວ່າ ຂຽນຫນັງສືໄປບອກໃຫ້ ທ້າວຄໍາພັນກັບຄືນມາສາ ບໍ່ຮໍ່າ ບໍ່ຮຽນຫຍັງແຫລະ ... ຮຽນໄປກໍບໍ່ພໍຊິໄດ້ຕື່ມຫຍັງດອກ. ເຈົ້າເພິ່ນກໍມີ ນາຍເພິ່ນກໍມີຫມົດແລ້ວ ... 6 ປີ ມັນບໍ່ແມ່ນ 6 ມື້ ແລະ ບໍ່ແມ່ນ 6 ເດືອນ ... ລອງຄິດເບິ່ງດີໆດູ ... ດີບໍ່ດີໄປຕິດແສ້ຕິດສາວ ພັດຊິເປັນແບບໃຫນ ໄກຕາໄກໃຈ ໃຜຊິເວົ້າໄດ້ ອັນຂອງຫມູ່ນີ້ ... "

ຟັງຄໍາເວົ້າຂອງປ້າບົວສີແລ້ວ ກໍຄືຄວາມເພິ່ນ ... ຂ້ອຍນອນບໍ່ຫລັບຫລາຍຄືນ ຍ້ອນຄໍາເວົ້ານັ້ນ ... ແຕ່ສຸດທ້າຍ ຂ້ອຍກໍຫັກຫ້າມຫົວໃຈໄດ້ ເຖິງຈະເປັນແບບໃດ ແລະ ມີຫຍັງເກີດຂຶ້ນ ຂ້ອຍກໍຈະບໍ່ໃຫ້ອ້າຍຄໍາພັນ ກັບຄືນກາງຮຽນ ໂດຍທີ່ບໍ່ໄດ້ໃບປະກາດສະນີຍະບັດ ...

ຂ້ອຍຢາກອ່ານໃຫ້ຈົບໃນຄືນດຽວ ແຕ່ຂ້ອຍຄິດວ່າ ປຶ້ມບັນທຶກສີຟ້າຫົວນີ້ ເກືອບ 3 ປີແລ້ວ ນັບແຕ່ຂ້ອຍ

ຈົບການສຶກສາມາແຕ່ຕ່າງປະເທດ ຂ້ອຍບໍ່ເຄີຍຄິດເລີຍວ່າ ຈະມີປຶ້ມບັນທຶກຫົວນີ້, ຂ້ອຍຈຶ່ງໂຈະໄວ້ ເພື່ອອ່ານໃນມື້ໜ້າ, ຂ້ອຍຈະບັນຈົງອ່ານ ອ່ານໄປຢ່າງຊ້າໆ ໃຫ້ສົມກັບວ່າ ເມຍຂ້ອຍ ໄດ້ຕັ້ງໃຈຂຽນມັນຂຶ້ນມາດ້ວຍຫມາກຫົວໃຈທີ່ ບໍລິສຸດ ... ແຕ່ແນວໃດກໍຕາມ ສຳລັບປຶ້ມບັນທຶກຫົວນີ້ ຂ້ອຍກໍຍັງບໍ່ເຂົ້າໃຈຄືເກົ່າ ... ບໍ່ເຂົ້າໃຈວ່າເປັນຫຍັງເມຍ ຂ້ອຍຈຶ່ງຕ້ອງເອົາປຶ້ມຫົວນີ້ມາໃຫ້ຂ້ອຍອ່ານ ໃນເວລານີ້ ຫລືວ່າ ອາດເປັນຍ້ອນຍາມໃດຂ້ອຍກໍມີແຕ່ໄປກັບໄປ ແຕ່ການໄປຄືແນວນີ້ ບໍ່ຮູ້ວ່າເມຍຂ້ອຍ ຈະບັນທຶກໄວ້ ອີກຫລືບໍ່ ...

*27 / 08 / 1995*

" ຂໍໂທດຍານ້າ ພວກຜູ້ຂ້າ ບໍ່ແມ່ນຄົນຂໍທານ ແຕ່ ມານີ້ ກໍເພື່ອຢາກຊື້ເຫັບຊະນິດດີໆຈັກໜ່ວຍ ເອົາໄປໄວ້ຟັງ " ຄຳເວົ້ານັ້ນ ບໍ່ມີສຽງຕອບຄືນມາ ນອກຈາກໜ່ວຍຕາ ທີ່ມືນໂຈ່ໂລ່ ດ້ວຍໃບໜ້າມ້ານຈືດ ທີ່ເຕັມໄປດ້ວຍ ຄວາມອຽງອາຍ ຂອງເຈົ້າຮ້ານ ແລະ ຄົນຜູ້ນັ້ນ ກຳລັງວ່າຈະອອກມາຂໍໂທດ ແຕ່ສອງຜົວເມຍຄູ່ນັ້ນ ກໍ່ໄດ້ຍ່າງໄປໄກແລ້ວ ຈຶ່ງປະປ່ອຍໄວ້ແຕ່ຄວາມກົນແໜງແຄງໃຈ ຂອງຜູ້ທີ່ມີຄວາມຜິດ ເຖິງບໍ່ຄິດມັນກໍມີແນວຄາໃຈ ແລະ ມັນກໍເປັນອຸທາຫອນສອນໃຈຄົນທີ່ບໍ່ເຄີຍເບິ່ງຄົນໃນແງ່ດີ...

# ອ້ອຍບໍ່ແມ່ນອໍທານ

ນະຄອນຫລວງວຽງຈັນ ໄດ້ຕື່ນຈາກການຫລັບໄຫລ ເມື່ອອາຍອຸ່ນຈາກແສງພະອາທິດ ຍາມຮຸ່ງອະລຸນສ່ອງ ເຍືອງຂຶ້ນສູ່ທ້ອງຟ້າ ທາງທິດບູລະພາ ຄວາມມືດດຳ ກໍາຕາໄດ້ກັບກາຍເປັນສະຫວ່າງເຈີດຈ້າມີສີສັນ ນ້ຳຄ້າງ ຕາມຍອດໄມ້ໃບຫຍ້າ ກໍ່ສ່ອງປະກາຍແວວວາວລະຍິບລະຍັບ ສະຫລັບສີ ແລະ ແລ້ວການເຄື່ອນໄຫວໄປມາຂອງຜູ້ຄົນ ກໍ່ຄ່ອຍໆຄຶກຄັກແບບມີຊີວິດຊີວາ. ລົດເມຖ້ຽວທໍາອິດ ຈາກ ທ່າງ່ອນ - ວຽງຈັນ ໄດ້ແລ່ນເຂົ້າຈອດຄິວພ້ອມດ້ວຍ ຄົນໂດຍສານ ທີ່ອັ່ງອໍເນືອງນັນ ຜູ້ຄົນທັງຂຶ້ນທັງລົງລົດ

ກໍເທົ່າໆກັບຕາມຈຸດປະສົງ ແລະ ທີ່ຫມາຍປາຍທາງ ຂອງໃຜລາວ. ສອງຜົວເມຍອາຍຸໄວອ້ອນຄົນ ພວມຈູງແຂນກັນລົງຈາກລົດເມຖ້ຽວນັ້ນ ດ້ວຍຄວາມລະມັດລະວັງ, ຜູ້ຊາຍຮ່າງກະດູກສູງຂາວ ໃສ່ແວ່ນຕາດຳ ຖືໄມ້ຄ້ອນເທົ້າ ຍັງຖືກຜູ້ເມຍກຳແຂນພາທາງນຳໄປຢ່າງໃກ້ຊິດ.

" ພໍ່ແກ້ວເອີຍ ວຽງຈັນເວລານີ້ ບໍ່ຄືວຽງຈັນໃນເມື່ອກ່ອນແລ້ວໃດ໋ ອັນໃດກໍ່ຖືກປ່ຽນແປງ ຕຶກອາຄານທັນສະໄຫມ ໄດ້ເກີດຂຶ້ນໃຫມ່ ຈົນບໍ່ສາມາດຈື່ຈຳຈົນຫມົດຈົນສ້ຽງໄດ້ ເບິ່ງແມ ຕະຫລາດເຊົ້າວຽງຈັນກໍ່ປຸກສ້າງໃຫມ່ງາມແທ້ໆແຫລະ. " ຜູ້ຍິງທີ່ຍ່າງທຽມຂ້າງໄດ້ຊີ້ມືໄປໃສ່ຕຶກຫລັງຄາສີຂຽວ ທີ່ສູງພະຫງ່າດຢູ່ເບື້ອງຫນ້ານັ້ນ.

" ຫວະ ມັນປ່ຽນແປງປານນັ້ນພຸ້ນຫວະ ແຕ່ຫນ້າເສຍດາຍເນາະ ທີ່ຂ້ອຍຕ້ອງຫລັບຢູ່ໃນຄວາມມືດຕະຫລອດ

ສາມສິບສີ່ປີມາແລ້ວ" ເວົ້າແລ້ວເອົາກໍຢຸດຢືນຢູ່ພ້ອມທັງຖອນຫາຍໃຈ ແກວ່ງຫົວຄ່ອຍໆ.

"ໄປເທາະພໍ່ແກ້ວ ຕາເວັນຂຶ້ນແດດແກ່ມັນຊິຮ້ອນໃດ໋ ຈັ່ງໃດມື້ນີ້ກະຕ້ອງໃຫ້ກັບທັນລົດເມ ຖ້າຮອດສຸດທ້າຍ" ການເອົາໃຈຂອງຜູ້ເປັນເມຍ ຕໍ່ຜົວລົບພິການຕາບອດສອງເບື້ອງ ທີ່ຄິດວ່າຕົນເອງ ເປັນລົບນີປົນດ້ອຍນັ້ນ ມັນຍາກຍິ່ງກວ່າສິ່ງໃດ ຕ້ອງໄດ້ເອົາອົກເອົາໃຈທຸກຢ່າງ ກິນເຂົ້າອາບນໍ້າ ເຂົ້າບ່ອນນອນ ຊັກເຄື່ອງ ຕະຫລອດຮອດການໄປໃສມາໃສ ບາງເທື່ອກໍອ່ານຂ່າວຄາວ ເລົ່າເລື່ອງສະພາບການບ້ານເມືອງ ແຕ່ນາງກໍອົດທົນເພາະສິ່ງນີ້ ຄືສິ່ງດຽວທີ່ນາງເລືອກເອົາ ຊຶ່ງມັນເປັນທັງຊີວິດຈິດໃຈ ແລະ ເງົາທຽມກາຍ 34 ປີມາແລ້ວ ທີ່ນາງໄດ້ເອົາໃຈໃສ່ປະຕິບັດຕໍ່ລູກຜົວແບບສະເຫມີຕົ້ນສະເຫມີປາຍຕະຫລອດມາ ດ້ວຍຄວາມຮັກ ແລະ ອີດູສົງສານ ແລະ ນາງກໍເຄີຍປະຕິຍານຕໍ່ຫນ້າການຈັດຕັ້ງ ແລະ ພໍ່ແມ່ພີ່ນ້ອງທັງ

ສອງກ້ຳສອງຝ່າຍວ່າ ຈະເຮັດໜ້າທີ່ຜູ້ເປັນເມຍໃຫ້ໄດ້ດີທີ່ສຸດ.

ປີນັ້ນ, ສົງຄາມທຳລາຍຢ່າງດຸເດືອດ ຝ່າຍກົງກັນຂ້າມ ໄດ້ລະດົມພົນທາງບົກ ທາງອາກາດ ຈູ່ໂຈມຖານທີ່ໝັ້ນເຂດປົດປ່ອຍ ຢ່າງຂະໜາດໜັກ ພວກມັນຫວັງຈະດັບສູນນັກຮົບເຮົາ ບໍ່ໃຫ້ຫລົງເຫລືອແມ່ນແຕ່ຄົນດຽວ ແຕ່ທຳລາຍເທົ່າໃດ, ຈູ່ໂຈມເທົ່າໃດ ຄວາມຄຽດແຄ້ນ ແລະ ນ້ຳໃຈເດັດດ່ຽວອົດທົນຂອງນັກຮົບເຮົາກໍເພີ່ມເທົ່າທະວີຄູນ ກອງທັບກໍຍິ່ງເຕີບໃຫຍ່ເຂັ້ມແຂງ. ຄັ້ງໜຶ່ງ, ບຸນມີພ້ອມດ້ວຍອ້າຍນ້ອງສິບຄົນ ຕິດຕາມໄລ່ຕີສັດຕູທີ່ແຕກທັບ ຈົນເຖິງແຄມຫ້ວຍນ້ຳ ເມື່ອຖືກຕ້ອນເຂົ້າມຸມ ສັດຕູກໍຕັ້ງຫລັກສູ້ບໍ່ຈັກລູກລະເບີດ, ປືນໃຫຍ່, ປືນນ້ອຍຍິງສາດໃສ່ກັນ ຈົນຫູດັບຕັບໄໝ້ ການສູ້ຮົບດຳເນີນໄປເກືອບຊົ່ວໂມງ ສັດຕູຈຳນວນໜຶ່ງ ກໍປະປືນລອຍຂ້າມນ້ຳ ສ່ວນທີ່ເຫລືອກໍບາດເຈັບລົ້ມຕາຍ ບາງຄົນ

ກໍຖືກຈັບເປັນຊະເລີຍ. ບຸນມີ ແລະ ອ້າຍນ້ອງທະຫານ ເຮົາ ເປັນຝ່າຍໄດ້ປຽບ ຍ້ອນເປັນຜູ້ໄລ່ຕ້ອນຕີ ຈຶ່ງບໍ່ມີຜູ້ເສຍສະຫລະຊີວິດ ແຕ່ບຸນມີກໍນອນຈົມກອງເລືອດ ເພາະຖືກສະເກັດລະເບີດສັດຕູ ໃນຂະນະທີ່ພວມຈະລຸກຂຶ້ນແລ່ນຕະລຸມບອນ ເຂົານອນຫມົດສະຕິບໍ່ຮູ້ເນື້ອຄີງ ໃນຂະນະທີ່ອ້າຍນ້ອງພວມແຕ່ງຄົນຫາມ ສົ່ງກັບຄືນໂຮງພະຍາບານໃຫຍ່ ຢູ່ແນວຫລັງ. ບຸນມີເຄີຍເຂົ້າຮ່ວມຫລາຍບັ້ນຮົບ ແລະ ແຕ່ລະຄັ້ງ ເຂົາກໍຖືກຜູ້ບັນຊາຍ້ອງຍໍຊົມເຊີຍວ່າເປັນນັກຮົບທີ່ດີເດັ່ນ ແລະ ອົງອາດກ້າແກ່ນ ເຂົາບໍ່ເຄີຍຈົ່ມວ່າທໍ້ຖອຍ ແລະ ແຕ່ລະຄັ້ງ ເຂົາຈະອອກຫນ້າຄຽງບ່າຄຽງໄຫລ່ກັບອ້າຍນ້ອງ ຕໍ່ສູ້ແບບບໍ່ເຄີຍຖອຍແມ່ນແຕ່ກ້າວດຽວ ເຂົາຈຶ່ງຖືກເລື່ອນຊັ້ນຂຶ້ນເປັນຜູ້ບັນຊາຫມວດ ແລະ ເທື່ອນີ້ ເຂົາບາດເຈັບສາຫັດ ແລະຖືກນໍາສົ່ງ ໂຮງພະຍາບານເຂດຊຽງຂວາງ. ພາຍຫລັງປິ່ນປົວຢູ່ໂຮງພະຍາບານເປັນເວລາຫນຶ່ງເດືອນ ອາການກໍຫາຍດີ ແຕ່ເຂົາກໍເສຍຕາສອງເບື້ອງ ຍ້ອນສະເກັດ

24/VII
ຫ້າມຈຳໜ່າຍ

ລະເບີດ ເຮັດໃຫ້ແກ່ນຕາທັງສອງແຕກ ແພດຫມໍໄດ້ເອົາໃຈໃສ່ປິ່ນປົວສຸດຄວາມສາມາດ ແຕ່ກໍເປັນເລື່ອງທີ່ເຫລືອວິໄສ ຈຶ່ງໄດ້ແຕ່ພຽງ ກອບກູ້ເອົາຊີວິດຂອງເຂົາໃຫ້ຄືນມາ ບຸນມີບໍ່ໄດ້ຂຶ້ນໄປຕີສັດຕູຢູ່ແນວຫນ້າອີກແລ້ວ ມີແຕ່ການຈັດຕັ້ງ ຫມູ່ຄູ່ລະດົມໃຫ້ກຳລັງໃຈ ແລະ ກໍຖືກນຳສົ່ງໃຫ້ໄປຢູ່ແນວຫລັງ ໃນບ່ອນທີ່ປອດໄພອັນເຫິງໄດ້ມີນະໂຍບາຍ ຕໍ່ນັກຮົບທີ່ບາດເຈັບ ເສຍອົງຄະຈຶ່ງຢາກຈະໃຫ້ມີຄົນບົວລະບັດຮັກສາ ຈຶ່ງລະດົມໄປຍັງສະມາຄົມຍິງ ເພື່ອວ່າຈະມີຜູ້ຂານອາສາເຮັດຫນ້າທີ່ນີ້ຊຶ່ງຈະເປັນທັງຜູ້ບົວລະບັດຮັກສາ, ເປັນຄູ່ເວົ້າຄູ່ຈາ ຄູ່ສົນທະນາ ແລະ ເປັນທັງຄູ່ຊີວິດ. ສາວວັນນີ ພະຍາບານສາວທີ່ບຸນມີເຄີຍໄດ້ຮັບ ການດູແລຈາກນາງ ໃນຂະນະທີ່ພວມປິ່ນປົວຢູ່ໂຮງພະຍາບານນັ້ນ ກໍອາສາຈະເຮັດຫນ້າທີ່ນີ້ ເບື້ອງຕົ້ນຫມູ່ຄູ່ເພື່ອນຝູງ ບໍ່ຄິດເລີຍວ່າ ວັນນີຈະເຮັດຄືແນວນັ້ນໄດ້ ແຕ່ນາງກໍຕອບວ່າ :

" ບໍ່ແມ່ນຂ້ອຍຮັກເຂົາ ແຕ່ຂ້ອຍອີດູສົງສານ ແລະ

ຕະຫລອດເວລາ ທີ່ໄດ້ຢູ່ໃກ້ຊິດກັນໃນໂຮງພະຍາບານ ມັນຄ້າຍກັບວ່າ ຕົນເອງມີຄວາມອົບອຸ່ນ ແລະ ແລ້ວການຈັດຕັ້ງກໍເຮັດພິທີແຕ່ງດອງໃຫ້ເປັນຜົວເປັນເມຍກັນ ແລະຕັ້ງແຕ່ມື້ນັ້ນຈົນມາເຖິງມື້ນີ້ ນີ້ທີ່ 34 ປີ ຜ່ານໄປຈົນມີລູກນຳກັນ 10 ຄົນ ແຕ່ລະຄົນກໍໃຫຍ່ສູງພຽງພໍ່ພຽງແມ່ແລະໄດ້ຮ່ຳໄດ້ຮຽນ ອອກເປັນພະນັກງານ, ທະຫານ, ຕຳຫລວດກໍມີ ແຕ່ບຸນມີ ກໍຍັງເປັນຄົນຫລັບໄຫລຢູ່ໃນຄວາມມືດ ເພາະເຂົາບໍ່ສາມາດຮູ້ໄດ້ວ່າ ວັນນີ ຜູ້ເປັນເມຍແລະ ລູກໆແຕ່ລະຄົນ ມີຫນ້າຕາຄືແນວໃດ ຍິ່ງນັບວັນກໍຍິ່ງຮູ້ສຶກວ່າ ຕົນເອງມີຄວາມອົບອຸ່ນ ເມື່ອຮູ້ວ່າບຸກຄົນອ້ອມຂ້າງທີ່ໃຫຍ່ສູງພຽງຫູພຽງຕາ ຄືເລືອດເນື້ອເຊື້ອໄຂຂອງຕົນ ແລະ ກໍບໍ່ເຄີຍຄິດເລີຍວ່າ ຊີວິດຂອງຕົນຈະມີມື້ນີ້ໄດ້ເຂົາ ແລະ ຄອບຄົວໄດ້ຮັບເງິນເດືອນ ນອກນັ້ນກໍ່ຍັງມີບ້ານຈັດສັນ ພ້ອມດ້ວຍທີ່ດິນປູກຝັງ ແລະ ໄດ້ຮັບການເບິ່ງແຍງລ້ຽງດູ ຈາກຂັ້ນເທິງຕະຫລອດມາ. ປະຈຸບັນບຸນມີກໍຢູ່ຮ່ວມກັນກັບຄອບຄົວຫມູ່ເພື່ອນ ທີ່ເປັນຄົນພິການ

ໃນສູນເສຍອົງຄະພິເສດ ກອງ 790 ທາງອນ. ລູກເຕົ້າ ກໍອອກເຮືອນເກືອບຫມົດແລ້ວ ຍັງເຫລືອກໍແຕ່ນາງ ນ້ອຍລູກສາວຫລ້າ ອາຍຸ 14 ປີ ທີ່ພວມຮຽນຢູ່ຊັ້ນ ມັດທະຍົມປີສຸດທ້າຍ ແລະ ມື້ນີ້ ສອງຜົວເມຍໄດ້ມີ ໂອກາດເຂົ້າມາວຽງຈັນ ວັນນີຮູ້ວ່າ ເຖິງຈະພາຜົວໄປໃສ. ຢູ່ບ່ອນໃດ ລາວກໍຍັງຢູ່ໃນຄວາມມືດ ນອກຈາກຈະໄດ້ ຍິນແຕ່ສຽງອຶກກະທຶກ ນັບນອງຂອງລົດລາພາຫານະ ທີ່ແລ່ນໄປມາ ແຕ່ນາງກໍພໍໃຈ ທີ່ຈະພາຜົວໄປທຸກແຫ່ງ ເທິງແຜ່ນດິນທີ່ມີການພັດທະນາ ອັນທີ່ແປກຫູຕ່າງຕາ ລຽບຕາມແຄມລະບຽງ ຫນ້າຕຶກອາຄານຮ້ານຄ້າທັນ ສະໄຫມ ໄປຮອດບ່ອນໃດ ນາງກໍແນະນຳ ແລ້ວອະທິ ບາຍວ່າ ອັນໃດເປັນອັນໃດ ສ່ວນບຸນມີກໍໄດ້ແຕ່ງຶກຫົວ ຕອບຮັບ. ສອງຜົວເມຍຈູງກັນມາຢຸດຢູ່ຕໍ່ຫນ້າຮ້ານຄ້າ ແຫ່ງຫນຶ່ງ. ວັນນີ ກວດສາຍຕາໄປມາ ເພື່ອເລືອກເບິ່ງ ສິນຄ້າ ທີ່ວາງຢາຍໄວ້ຢ່າງເປັນລະບຽບຈົບງາມນັ້ນ ແລະ ພວມຈະຖາມຜົວວ່າ : ພໍ່ແກ້ວ ຂ້ອຍຢາກໄດ້ເຫັບຫນ່ວຍນີ້

ໄວ້ໃຫ້ລູກສາວເຮົາແທ້ເດ " ແຕ່ບໍ່ທັນໄດ້ເວົ້າວ່າອັນໃດ ກໍມີສຽງໜຶ່ງດັງອອກມາຈາກຂ້າງໃນ ແບບບໍ່ພໍໃຈວ່າ :

" ສູເດັກນ້ອຍ ເອົາເງິນທານໃຫ້ຂະເຈົ້າຈັກທ້າສິບກີບ ແລ້ວບອກເຂົາໄປສະ ຢູ່ບ່ອນນີ້ ແມ່ນບ່ອນຊື້ບ່ອນຂາຍ ແຕ່ບໍ່ແມ່ນບ່ອນມາຂໍທານ ".

ຄຳເວົ້າທີ່ດັງອອກມາ ບໍ່ຕ່າງຫຍັງກັບຄົມມີດປາຍແຫລມ ທີ່ປັກສຽບໃສ່ກາງຊວງອົກຂອງສອງຜົວເມຍ ຈິນຕົກສະເງີ້ຽນງົງ ວັນນີ ພະຍາຍາມອົດກັ້ນ ແລ້ວກໍທຸ່ນທ່ຽງເວົ້າຂຶ້ນວ່າ :

" ຂໍໂທດຍານ້າ ພວກຜູ້ຂ້າ ບໍ່ແມ່ນຄົນຂໍທານ ແຕ່ມານີ້ ກໍເພື່ອຢາກຊື້ເຫັບຊະນິດດີໆຈັກໜ່ວຍ ເອົາໄປໄວ້ຟັງ " ບໍ່ມີສຽງຕອບຄືນມາ ນອກຈາກໜ່ວຍຕາທີ່ມືນໂຈ່ໂລ່ ດ້ວຍໃບໜ້າມ້ານຈືດ ທີ່ເຕັມໄປດ້ວຍຄວາມອຽງອາຍຂອງເຈົ້າຮ້ານ ແລະ ຄົນຜູ້ນັ້ນ ກຳລັງວ່າຈະອອກມາຂໍໂທດ ແຕ່ສອງຜົວເມຍຄູ່ນັ້ນ ກໍໄດ້ຍ່າງ

ໄປໄກແລ້ວ ຈຶ່ງປະປ່ອຍໄວ້ແຕ່ຄວາມກິນແໜງແຄງໃຈ ຂອງຜູ້ທີ່ມີຄວາມຜິດ ເຖິງບໍ່ຄິດມັນກໍມີແນວຄາໃຈ ແລະ ມັນກໍເປັນອຸທາຫອນສອນໃຈ ຄົນທີ່ບໍ່ເຄີຍເບິ່ງຄົນໃນ ທາງທີ່ດີ ຈຶ່ງໄດ້ແຕ່ຢືນແນມນຳຫລັງຕາມສອງຜົວເມຍ ທີ່ພວມຈະ ຫາຍລັບໄປກັບຝູງຊົນ.

ລົດເມວຽງຈັນ-ທ່າງ່ອນ ຖ້ຽວສຸດທ້າຍ ໄດ້ພາ ເອົາຄົນໂດຍສານ ທີ່ມີສອງຜົວເມຍ ພ້ອມດ້ວຍເທັບ ໜ່ວຍໃໝ່ ມາສົ່ງຈົນເຖິງຈຸດໝາຍປາຍທາງ .

ຂ້ອຍຟັງຄວາມແມ່ ແລະ ກໍເຮັດຕາມຄວາມປະສົງຂອງແມ່. ຂ້ອຍພານ້ອງໆຊ່ວຍແມ່ເຮັດວຽກເຮືອນການຊານ ແລະ ເຮັດທຸກຢ່າງຕາມຄວາມສາມາດ...

# ທາງສາຍປ່ຽວ

ທາງສາຍນີ້ ນັບແຕ່ມື້ແມ່ເກີດຈົນມາເຖິງປະຈຸບັນ ກໍຍັງບໍ່ມີເສັ້ນທາງໃດທີ່ດີກວ່າທາງສາຍນີ້ ... ເພາະມັນແມ່ນທາງສາຍດຽວ ທີ່ສາມາດທຽວເຂົ້າທຽວອອກ ຂອງຜູ້ຄົນລະຫວ່າງບ້ານຫນອງປິງ ແລະ ຕົວເມືອງ ... ແມ່ບອກວ່າ ເມື່ອຫລາຍປີກ່ອນ ທາງສາຍນີ້ກໍເປັນພຽງທາງຄວາຍ ແລະ ຣົກເຮື້ອໄປດ້ວຍປ່າດົງວົງກົດ ທາງສາຍນີ້ ຢ່າວ່າແຕ່ລົດໃຫຍ່ເລີຍ ຂະຫນາດລົດຖີບກະຍັງບໍ່ຄ່ອຍເຫັນຄົນຂີ່ຜ່ານໄປມາ ... ຖ້າມີກໍມີພຽງແຕ່ລົດຖີບພໍ່ຄ້າຂາຍເສື້ອຜ້າຄົນຂະເຫມນຂີ່ເຂົ້າມາ ... ຂາຍຜ້າແລ້ວກໍ

ອອກໄປ ... ແມ່ເວົ້າວ່າ ຕອນຍັງເປັນເດັກ ບໍ່ພຽງແຕ່ໄປຢືນເບິ່ງພໍ່ຄ້າຂາຍເສື້ອຜ້າ ແລ້ວຍັງໄປຢືນເບິ່ງລົດຖີບ ... ບາງຄັ້ງກໍເອົາມືໄປລູບໆຄຳໆເບິ່ງ ແລ້ວກໍຫົວຂວັນວ່າມັນເປັນເລື່ອງຕະຫລົກ ເພາະມີແຕ່ 2 ລໍ້ນ້ອຍໆ ເວລາຄົນຂີ່ໄປ ເປັນຫຍັງຈຶ່ງບໍ່ລົ້ມ.

ແມ່ເວົ້າມາຮອດບ່ອນນີ້ ພວກເດັກນ້ອຍບໍ່ເຂົ້າໃຈວ່າ ແມ່ເວົ້າເຖິງຫຍັງ ... ບາງຄົນກໍຖາມວ່າ : " ຈັ່ງຊັ້ນລົດຖີບແມ່ຂີ່ໄປຂາຍຜັກບົ້ງ ຢູ່ຕະຫລາດທຸກໆມື້ ຄືບໍ່ລົ້ມຊັ້ນບາ ". ແມ່ຟ້າວຕອບວ່າ:

" ອ້າວ ກະຍັງວ່າ ແຕ່ກີ້ ຕັ້ງແຕ່ແມ່ຍັງເປັນເດັກ ..."

ລູກໆ ພາກັນຫົວຂຶ້ນ ... ແລ້ວແມ່ກໍບໍ່ເລົ່າຕໍ່ ແລະແມ່ກໍບອກລູກໆວ່າ :

" ໄປນອນສາລູກເອີຍ ... ເພາະມື້ອື່ນຈະໄດ້ໄປໂຮງຮຽນແຕ່ເຊົ້າ ".

ລູກໆໄປນອນແລ້ວ ແຕ່ແມ່ຍັງນັ່ງມັດເຄື່ອງ ຂາຍ ... ແມ່ເອົາຜັກບົ້ງມາມັດ ແລ້ວຈັດວາງລົງໃສ່ກະຕ່າ. ລົດຖີບຂອງແມ່ ມີໄມ້ຄານຄາດຂວາງ ສໍາລັບຫ້ອຍກະຕ່າ ສອງເບື້ອງ ແມ່ເຮັດແນວນີ້ມາ ຕັ້ງແຕ່ຕອນພໍ່ຍັງມີຊີວິດຢູ່ ແຕ່ເມື່ອສິ້ນບຸນຂອງພໍ່ ວຽກແມ່ກໍຍິ່ງໜັກໜ່ວງຂຶ້ນ.

ແມ່ເຮັດທຸກຢ່າງ ເພື່ອໃຫ້ລູກໆໄດ້ເຂົ້າໂຮງຮຽນ ໝົດທຸກຄົນ. ເຖິງຈະລໍາບາກຍາກແຄ້ນປານໃດກໍຕາມ ແມ່ກໍເຮັດເພື່ອລູກໆ ແລະ ຄອບຄົວ ... ແມ່ເປັນທັງພໍ່ ແລະ ເປັນທັງແມ່ ແລະ ລູກໆກໍແມ່ນສ່ວນປະກອບ ທີ່ສໍາຄັນຂອງແມ່ ... ຄອບຄົວຂອງພວກເຮົາມີນາຕອນ ໜຶ່ງທີ່ແມ່ນມູນມັງທີ່ພໍ່ເຖົ້າ ແລະ ແມ່ເຖົ້າປະໄວ້ໃຫ້ ແລະ ອາໄສນາຕອນນີ້ແຫລະ ຈຶ່ງຊ່ວຍໃຫ້ຄອບຄົວພວກເຮົາ ຢູ່ໄດ້ຕະຫລອດມາ. ແມ່ປູກຜັກບົ້ງຢູ່ໜອງກາງນາ ເກັບ ເຊົ້າ ເກັບແລງ ແບ່ງໄປຂາຍຕະຫລາດໃນເມືອງ ກໍພໍໄດ້ ແລງໄດ້ງາຍ ແລະ ທ້ອນໂຫອມເລັກໆ ນ້ອຍໆ ພໍມີເງິນ

ຊື້ປື້ມຊື້ສໍໃຫ້ລູກໆ ເຂົ້າຮຽນ ຫນັງສື.

ຂ້ອຍເປັນລູກຜູ້ກົກ ມີອາຍຸພຽງແຕ່ 16 ປີ ຍັງຮຽນຢູ່ຫ້ອງ ອ1 ຄິດຢາກປົດເອົາວຽກນີ້ ອອກຈາກແມ່ດ້ວຍການອອກໂຮງຮຽນກາງປີ ແຕ່ແມ່ກໍປະຕິເສດ ຂ້ອຍເວົ້າເຖິງເລື່ອງນີ້ຂຶ້ນມາເທື່ອໃດ ຈະສັງເກດເຫັນວ່າແມ່ບໍ່ພໍໃຈເທື່ອນັ້ນ ແມ່ບອກວ່າ :

" ຕັ້ງໃຈຮຽນລູກເອີຍ ... ເພາະວ່າຄົນເຮົາ ມີແຕ່ຮຽນເທົ່ານັ້ນແຫລະ ຈຶ່ງຈະສາມາດຊ່ວຍ ຕົນເອງໄດ້ ".

ຂ້ອຍຟັງຄວາມແມ່ ແລະ ກໍເຮັດຕາມຄວາມປະສົງຂອງແມ່ບອກ. ຂ້ອຍພານ້ອງໆຊ່ວຍແມ່ເຮັດວຽກເຮືອນການຊານ ແລະ ເຮັດທຸກຢ່າງຕາມຄວາມສາມາດ.

ຄືນນີ້, ພວກນ້ອງໆ ສາມຄົນນອນຫມົດແລ້ວ ແຕ່ຂ້ອຍຍັງນອນບໍ່ຫລັບ, ຂ້ອຍພິກຄິງໄປມາຫລາຍເທື່ອ ແຕ່ຍັງບໍ່

ເຫັນແມ່ເຂົ້ານອນ ... ຂ້ອຍຈຶ່ງລຸກຂຶ້ນຍ່າງໄປຫາແມ່ຢູ່ເຮືອນຄົວ. ຂ້ອຍພວມຈະທັວງແມ່ ແຕ່ແມ່ຖາມຂ້ອຍກ່ອນວ່າ :

" ລູກເອີຍ ເດິກແລ້ວ ເປັນຫຍັງບໍ່ໄປນອນ ".

" ລູກນອນບໍ່ຫລັບ ".

ແມ່ຖອນຫາຍໃຈຍາວຍາວໆ ແລ້ວກໍແນມເບິ່ງຫນ້າຂ້ອຍດ້ວຍແວວຕາ ທີ່ເຕັມໄປດ້ວຍຄວາມຮັກ ແລະເປັນຫ່ວງ. ຂ້ອຍຍ່າງມາແລ້ວນັ່ງລົງຂ້າງໆແມ່ ແລະໃນເວລານັ້ນ ຝົນຫ່າໃຫຍ່ກໍຖອກເທລົງມາຄືຟ້າຮົ່ວຝົນນອງ. ແມ່ປະມືຈາກການມັດຜັກບົ້ງ ແລ້ວກໍເກັບເອົາຄຸ, ຊາມອອກໄປໂຕ່ງນ້ຳຝົນ ທີ່ລົ້ນຫລັ່ງຈາກຊາຍຄາ ... ແມ່ຈົ່ມພຶມພຳວ່າ :

" ຟ້າເອີຍ ຝົນເອີຍ ... ເປັນຫຍັງຈຶ່ງຕົກບໍ່ຮູ້ຢຸດຮູ້ເຊົາເດນໍ ... ຢຸດກໍຢຸດພໍອຶດໃຈທໍ່ນັ້ນ ເປັນແນວນີ້ ຟ້າຂ້າຄົນແທ້ໆແລ້ວ ".

ແມ່ກັບເຂົ້າມາພ້ອມກັບໃບໜ້າ ແລະ ນອຍຜົມທີ່ປຽກໂປຍ ... ແມ່ນັ່ງລົງສົບຕໍ່ມັດຜັກບົ້ງ ຂ້ອຍຈຶ່ງຖາມແມ່ວ່າ :

" ຝົນຕົກຄືແນວນີ້ ຕົກແລ້ງປີໜ້າ ໜອງຢູ່ນາເຮົາ ປາຊິມີຫລາຍໄດ້ແມ່ ".

" ເລື່ອງມີມັນກະມີຢູ່ດອກລູກເອີຍ ... ແຕ່ລູກຮູ້ບໍ່ວ່າທີ່ງນາຫລາຍບ່ອນ ນໍ້າຖ້ວມຈົນບໍ່ເຫັນຕົ້ນເຂົ້າແລ້ວທາງຫລາຍສາຍກໍຂາດເພ ລົດແລ່ນໄປມາບໍ່ໄດ້ ... ຂ້ອຍງຶກຫົວ ແລ້ວຖາມແມ່ຕໍ່ວ່າ :

" ຄັນຊັ້ນ ທາງບ້ານເຮົາກໍຊິຂາດບໍ່ ".

" ບໍ່ຂາດດອກລູກ ... ແຕ່ລົດຖີບຄືພວກເຮົາ ກໍຕ້ອງລໍາບາກບໍ່ໜ້ອຍ ... ບາງມື້ແມ່ຕ້ອງ ໄດ້ຈິ້ມຕີນອອກຈາກກົງລົດ ຈິ້ມອອກແລ້ວຕີນກໍຕິດຄືນ ... ບີບໄປບາງຄັ້ງກໍລົງຢາງຊູລົດ ແລະ ກະຕ່າຜັກໄປ ...ຫລາຍເທື່ອແມ່ກໍລົ້ມບໍ່ຈັກລົດບໍ່ຈັກຄົນ ຕີນຕິດເປືອນໄປໝົດ ... "

ແມ່ເລົ່າມາຮອດບ່ອນນີ້ ຂ້ອຍກໍຍິ່ງສົງສານແມ່

ຂ້ອຍຢາກຊ່ວຍແມ່ ຢາກເຮັດທຸກຢ່າງເພື່ອແມ່ ແຕ່ຂ້ອຍພັດຍັງນ້ອຍ ... ນ້ອຍເກີນກວ່າຈະຮັບພາລະຂອງແມ່ໄດ້ໃນເວລານີ້ ແລະ ຄືນນີ້ ນອກຈາກສຽງອຸ່ນອີ່ມລົມກັນຂອງສອງແມ່ລູກພວກຂ້ອຍແລ້ວ ກໍມີພຽງສາຍຝົນທີ່ຫລົ່ນຈາກຊາຍຄາ ... ແລະ ບາງຄັ້ງກໍມີແສງແມບເຫລື້ອມແລ້ວກໍຕິດຕາມມາດ້ວຍ ສຽງຟ້າຮ້ອງດັງກະຫື່ມ ຊວນໃຫ້ອົບໜາວລຸກ ແລະ ຄືນນີ້ກໍແມ່ນອີກຄືນໜຶ່ງ ທີ່ແມ່ນອນເດິກແຕ່ເດິກປານໃດນັ້ນ ຂ້ອຍບໍ່ສາມາດຮູ້ໄດ້ ເພາະໃນເວລາຕໍ່ມາ ຂ້ອຍກໍຄ່ອຍໆ ເຊື່ອບຫລັບໄປ ຢູ່ໃກ້ໆກັບຂ້າງແມ່ແລະ ນ້ອງໆ ...

*26 / 08 / 1995*

ບັບແຕ່ແມ່ປ້າພອງ ໄດ້ຮັບຈົດໝາຍ ປ້າກະຢູ່ຢ່າງຄືນ ທີ່ມີຄວາມຫວັງ. ເຖິງໃຜຕໍ່ໃຜ ຊິບໍ່ເບິ່ງແຍງຫລຽວແລ ບໍ່ມີຄືນຂຶ້ນຄືນລົງ ເຮືອນກໍ່ຕາມ ປ້າກໍທົນຢູ່ໄປຊື່ແນວນັ້ນ ວ່າແຕ່ ປ້າບໍ່ເຮັດຜິດບ້ານພານເມືອງ ແລະ ບໍ່ໄດ້ສ້າງ ຄວາມເດືອດຮ້ອນໃຫ້ແກ່ໃຜກໍພໍ ແລະແລ້ວ ວັນທີ່ປ້າລໍຄອຍ ກໍມາເຖິງ ...

# " ແມ່ "

ນັບແຕ່ປ້າພວງໄດ້ຮັບ ຈ.ໝ. ຈາກທ້າວດວງ ລູກຊາຍຫລ້າ ທີ່ໜີໄປຕ່າງປະເທດແຕ່ດົນພຸ້ນ ປ້າກໍມີແຕ່ລໍຄອຍ ຄອຍຄວາມຫວັງວ່າ ວັນໜຶ່ງຂ້າງໜ້າໃນບໍ່ຊ້າ ຕົນຈະເຫັນລູກຊາຍຄົນນີ້ອີກ. ຈົດໝາຍສະບັບນີ້ ລູກຊາຍຂອງປ້າຂຽນມາ ມີບາງຕອນເວົ້າວ່າ :

" ແມ່, ລູກຢູ່ພຸ້ນມີຄວາມສຸກສະບາຍດີ ສຸກແຕ່ກາຍເທົ່ານັ້ນ ສ່ວນຈິດໃຈມີແຕ່ຄວາມທຸກ ແລະ ຄິດເຖິງທຸກຄົນທີ່ຢູ່ທາງພີ້, ສຸກຢູ່ບ້ານເຂົາກໍຄືສຸກທີ່ເຫັນຄວາມຈະເລີນສີວິໄລ ນອກເໜືອຈາກນັ້ນ ກໍຂື້ນກັບແຕ່ລະຄົນ ບາງຄົນ

ກໍວ່າດີ ແຕ່ບາງຄົນກໍວ່າບໍ່ດີ ແລະ ມາພ້ອມກັບຈົດໝາຍ ສະບັບນີ້ ລູກໄດ້ຝາກມາໃຫ້ແມ່ໃຊ້ຈ່າຍກ່ອນ 100 ໂດລາ ຫວັງວ່າຈະປະຢັດໃຊ້ປະຢັດຈ່າຍໃຫ້ເປັນປະໂຫຍດ ຢູ່ພຸ້ນ ຫາເງິນຍາກຫລາຍ ເດືອນນີ້ລູກຜ່ອນເອົາລົດໃຫມ່ມາຂີ່ ຈຶ່ງມີມາໃຫ້ແມ່ພຽງເທົ່ານີ້ ເອົາໄວ້ໂອກາດໜ້າ ແລະ ບາງທີ ໂຊກດີທ້ອນເງິນໄດ້ ຈະກັບມາຢາມແມ່ ".

ເຊັກເງິນ 100ໂດລາ ແລະຈົດໝາຍ ເຮັດໃຫ້ ນິ້ວມືຂອງຜູ້ເປັນແມ່ທີ່ຫິດຫ່ຽວນັ້ນສັ່ນເຊັນ ແມ່ປ້າ ອ່ານຈົດໝາຍບໍ່ທັນຈົບ ກໍປ້າຍມືຂຶ້ນເຊັດນ້ຳຕາ ທີ່ຊືມອອກ ມາຢູ່ຕາມຂອບຕາ ທີ່ເປັນຜົ້ງຫລຸບເຂົ້າໄປໃນໃບໜ້າ ອັນຫ່ຽວຍານ.

" ບັກດວງ ! ບັກດວງລູກຫລ້າອີແມ່ ໃຜໆກໍ່ຊ່າ ວ່າລູກຕາຍ ມາເຍີຂວັນເອີຍລູກຫລ້າອີແມ່, ບັກດວງ ຄ້ຳຄູ້ນຄ້ຳຄູ້ນ ", ປ້າພວງຍໍມືໃສ່ຫົວພາວະນາສາທຸ.

ການໄດ້ຮັບຂ່າວຂອງລູກຊາຍ ເຮັດໃຫ້ແມ່ປ້າ ຢາກມີຊີວິດຕໍ່ຍາວອອກໄປອີກຮອດ 100 ປີ. ແຕ່ມື້ນີ້ ອາຍຸສັງຂານຈະລ່ວງເລີຍກາຍ 60, ແຕ່ປ້າພວງກະຍັງຢູ່ດ້ວຍຄວາມຫວັງ ແລະ ຄວາມຫວັງອັນນີ້ມັນອາດບໍ່ມີຂອບເຂດກຳແພງ. ປ້າເຄີຍເຈັບອອດໆແອດໆ ແລະ ເຄີຍຄິດຢາກຕາຍເພາະເບື່ອໜ່າຍຊີວິດ, ແຕ່ມາບັດນີ້ ປ້າຄ່ອຍໆຫາຍດີມີກຳລັງວັງຊາຂຶ້ນ. ຄົນເຮືອນໃກ້, ເຮືອນຄຽງທີ່ເຄີຍຫວັງວ່າ : ຢ່າງດົນກໍ່ຄົງບໍ່ກາຍລະດູຝົນປີຊິມາ ເມື່ອເບິ່ງອາການຂອງປ້າແລ້ວ. ຫລາຍປີມານີ້ ນັບແຕ່ທ້າວຊວງ ລູກຊາຍຜູ້ກົກອອກເຮືອນແລ້ວ ໄປຢູ່ນຳເມຍທາງປາກເຊພຸ້ນກະບໍ່ເຫັນສົ່ງຂ່າວຄາວອັນໃດມາຫາແມ່, ບໍ່ຈັກວ່າເປັນຕາຍຮ້າຍດີແນວໃດກະບໍ່ຮູ້ ຈຶ່ງຍັງເຫລືອແຕ່ແມ່ປ້າພວງຜູ້ດຽວ, ຍ້ອນຄວາມທຸກຍາກຂາດເຂີນ, ເຂົ້າຂາດແລງແກງຂາດໝົ້ ແລະ ເຈັບອອດໆແອດໆ ພີ່ໆນ້ອງໆ ຄົນລົ້ງເຄີຍກໍ່ຫ່າງເຫີນບໍ່ເຫັນໃຜມາຂຶ້ນມາລົງເຮືອນ ແຕ່ປ້າກະບໍ່ເຄີຍຕຳນິເຂົາເຈົ້າດອກ ແນວວ່າໂຕມັນທຸກ ທຸກກະຢູ່ສົມທຸກ

ວ່າແຕ່ບໍ່ໄດ້ຂໍທານກິນ ມີຫຍັງກະກິນ. ບໍ່ມີແລ້ວກະຊອກກະຫາ ແນວວ່າລືນປາກດຽວ ກິນແລ້ວກະແລ້ວໄປ.

" ສູເຈົ້າກະບໍ່ສັງເກດເບິ່ງແດ່ຫວະ ມາຫວ່າງນີ້ຄືບໍ່ເຫັນ ປ້າພວງພາຍກະຕ່າ ແບກສຽມໄປຫາຫນໍ່ໄມ້ແຄມດົງພຸ່ມອີກແລ້ວ ແຕ່ລາວກະຍັງມີແນວລົງວັດລົງວາສິ່ງຈັງຫັບສັບເພນເປັນປົກກະຕິ ". ປ້າແຫລ້ ທັກທ້ວງໃນຄະນະທີ່ຍັງນັ່ງຕີວົງ ຄ້ຽວຫມາກກັບຄົນອື່ນໆ.

" ອ້າວຊ່າງວ່າແທ້ ປ້າແຫລ້ ບໍ່ແມ່ນຫນໍ່ໄມ້ມັນຊິອອກຄືນ້ຳອອກບໍ່ ຫາດູ ນີ້ມັນກະຫມົດເປັນລະບໍແນວວ່າເອົາແກງແລງງາຍຢູ່ກັບສຸມຫນໍ່ໄມ້ ". ແມ່ຄຳມີເວົ້າເຫນັບແຫນມ ແລ້ວຄົນອື່ນໆກໍ່ຫົວຂຶ້ນ ແລ້ວນ້າສາວແກ່ນ ກໍສອຍຂຶ້ນຕໍ່ :

" ບັກຊວງກະໂພດ ໄປນຳເມຍກະຊ່ຳວ່າໄປຕາຍ, ມິດຈົບບໍ່ມີກິ່ນມີເງົາ ແຕ່ຄິດໄປຄິດມາ ກະເປັນຕາອີດູຕົນຊາດບັກດວງ ລູກຊາຍຜູ້ຫລ້າ ຕາຍບໍ່ໄດ້ສິບໄດ້ສາບ

ແຕ່ບາງຄົນພັດວ່າ ຍັງເຫັນມັນຢູ່ອາເມລິກາວ່າຊັ້ນ ".

"ໂອຍ ! ຄົນຍັງຢູ່ອາເມລິກາ ເຮັດໃດແມ່ມັນຊິທຸກປານນີ້ ຂີ້ຮ້າຍກະບໍ່ວ່າຕີເບາະ ຊິປະໃຫ້ແມ່ມັນຕາຍແບບບໍ່ມີຄົນມັຽນ ".

"ເຊົາໆ, ອັນພວກເຈົ້າມັນກະພໍຊໍ່າບັ້ນແຫລະທຸກທີ່ໃດແຫ່ງຊໍ້າ ເກີດເປັນນີ້ເປັນອັນ ກະຮູ້ແຕ່ຈົ່ມວ່ານິນທາຄົນອື່ນແນວບໍ່ດີ ຄືບໍ່ເຫັນວ່າພາກັນອອກຄໍາຄິດຄໍາເຫັນວ່າ ເຮັດແນວໃດຊິຊ່ວຍເຫລືອລາວ ຍາມທຸກຍາກຂາດເຂີນ ເຈັບເປັນກໍໄປອື່ນໄປລົງຢື້ຢາມຖາມຂ່າວ ຄົນບໍ່ທັນຕາຍ ບໍ່ວ່າຕີມັນຊິບໍ່ມີແນວດີຈັກຢ່າງ." ພໍ່ລຸງເພັງຍົກມືຄັດຄ້ານດ້ວຍຄວາມຢາກຮ້າຍ ຈຶ່ງເຮັດໃຫ້ບາງຄົນທົນຟັງບໍ່ໄດ້ ລຸກຂຶ້ນຍ່າງຫນີ. ແຕ່ກ່ອນຊິຫນີອອກໄປພັດຖີ້ມທ້າຍດ້ວຍຄວາມເວົ້າທີ່ບໍ່ຍິນຍອມ ໄວ້ໃຫ້ລຸງເພັງວ່າ :

" ພໍ່ລຸງເພງ ເຈົ້າທັນເດ ກະເຄີຍຄິດຢາກຊ່ວຍເຫລືອລາວ ຄືຄວາມເວົ້າທັ້ນແດ່ບໍ ຫລືວ່າຮູ້ຈັກເວົ້າໃຫ້ແຕ່ຄົນອື່ນ ".

ບັບແຕ່ແມ່ປ້າພວງ ໄດ້ຮັບຈົດໝາຍ ປ້າກະຢູ່ຢ່າງຄົນທີ່ມີຄວາມຫວັງ, ເຖິງໃຜຕໍ່ໃຜຊິບໍ່ເບິ່ງແຍງ ຫລຽວແລບໍ່ມີຄົນຂຶ້ນຄົນລົງກໍ່ຕາມ ປ້າກໍທົນຢູ່ໄປຄືແນວນັ້ນ ວ່າແຕ່ປ້າບໍ່ເຮັດຜິດບ້ານພານເມືອງ ແລະ ບໍ່ໄດ້ສ້າງຄວາມເດືອດຮ້ອນໃຫ້ແກ່ໃຜກໍພໍ ແລະແລ້ວ ວັນທີ່ປ້າລໍຄອຍກໍມາເຖິງ ແລະ ວັນນັ້ນ ມັນຄ້າຍຄືຄວາມຝັນ ທີ່ບໍ່ອາດເປັນຈິງ ແຕ່ມັນກະເປັນໄປແລ້ວ ເມື່ອລົດຕັກຊີໂດຍສານສີຂາວຄັນໜຶ່ງ ແລ່ນມາຈອດຢູ່ທາງດິນແດງເຂົ້າບ້ານພ້ອມໆກັບຊາຍຄົນໜຶ່ງ ທີ່ມີທີບເຄື່ອງໜ່ວຍໃຫຍ່ ກ້າວຂາອອກມາ. ເຂົາເຊີດໜ້າສຳຜັດກັບສາຍລົມ ທ້ອງຟ້າ ແລະກິ່ນອາຍຂອງຜືນແຜ່ນດິນ ທີ່ເຄີຍຢູ່ອາໄສ ມາແຕ່ຍາມເຍົາໄວລົດຄັນນັ້ນແລ່ນອອກໄປແລ້ວ ແຕ່ຄົນໆນັ້ນ ຍັງຢືນຢູ່ ແລະທັນໃດນັ້ນ ກະມີສຽງ ຊັບຊິ່ມຈາກປາກຕໍ່ປາກ ແລ້ວທັກທ້ວງເມືອງບັນຂຶ້ນ :

" ບັກດວງ ສູເຈົ້າ ! ບັກດວງ ມາແຕ່ອາເມລິກາ ".

" ທ້າວດວງ ! ດວງຫລານແມ່ປ້າແມ່ນບໍ ໄປຈັ່ງໃດ ມາຈັ່ງໃດເດ້ຫລານເອີຍ ! ມາໆ ມາແວ່ ກິນນ້ຳກິນໃນກ່ອນ ຈັກໜ້ອຍຈຶ່ງຄ່ອຍໄປ ". ປ້າແຫລ້ ທັກທ້ວງສຽງໃສ.

" ທ້າວດວງຫວະ ! ຕ້າຍຕາຍ ຈັ່ງແມ່ນຜູ້ຈິບຜູ້ງາມ ທັງໃຫຍ່ທັງສູງເນາະຫລານເນາະ ! ໄປໆ ໄປແວ່ເຊົາ ເຮືອນນ້າສາວກ່ອນ ແມ່ເຈົ້າໄປຫາໜໍ່ໄມ້ບໍ່ທັນມາດອກ ". ນ້າສາວແກ່ນອອກປາກຊວນ.

ສຽງອຶກກະທຶກພ້ອມກັບການຫຸ້ມລ້ອມ ຂອງເຖົ້າແກ່ ແມ່ເຮືອນ ແລະ ເດັກນ້ອຍ ກໍຫຍັບໃກ້ເຂົ້າມາ ຕິເປັນວົງ ມົນອ້ອມຕົວຊາຍໜຸ່ມ ແຕ່ໃຜຊິຮູ້ວ່າ ໃນຈຳນວນ ຜູ້ຄົນເຫລົ່ານັ້ນ ຍັງມີໃບໜ້າ ທີ່ດທ່ຽວຢູ່ຍີ່ ທີ່ມີໜັງ ຫຸ້ມກະດູກນັ້ນ ໄດ້ໜ່ານອງໄປດ້ວຍນ້ຳຕາ, ປ້າບໍ່ສາມາດ ທັກທ້ວງຊື່ລູກຊາຍຂອງຕົນ ໃຫ້ມີສຽງທີ່ຫລຸດລອດ ອອກມາຈາກຮູຄໍ ເພາະທັງໝົດນັ້ນຄືມີແນວມາອັດອັ້ນ ຕັນໃຈ ນອກຈາກການສະອື້ນໄຫ້. ດວງ ເພັ່ງເລັ່ງເບິ່ງ

ດວງຕາຄູ່ນັ້ນ ແລ້ວເອົາກໍຄ່ອຍໆຍ່າງເຂົ້າໄປຫາ ແລະ ທັກຂຶ້ນວ່າ :

"ແມ່ !

ພຽງແຕ່ເທົ່ານັ້ນ ສຽງຮ້ອງໄຫ້ ຂອງຄົນຊະລາ ກໍດັງຂຶ້ນທ່າມກາງ ການຍິນທຸກ ແລະ ເວດທະນາຂອງ ຜູ້ຄົນທີ່ຢູ່ໃນນະທີແຫ່ງນັ້ນ.

ແລະ ຕັ້ງແຕ່ນີ້ນັ້ນມາ ເຮືອນຂອງປ້າພວງ ກໍບໍ່ອຶດ ແຕ່ພີ່ແຕ່ນ້ອງ ແລະ ຄົນຫຼວງຂຶ້ນຫຼວງລົງ ເພາະວ່າ ທ້າວດວງ ໄດ້ສັນຍາວ່າ ນາເທື່ອນີ້ ຈະບໍ່ຍອມໜີຈາກ ແມ່ຜູ້ເຖົ້າແກ່ຊະລາການໄປໃສອີກແລ້ວ ...

# ແຮງກະຕັນຍູ



ແສງພະອາທິດຍາມຮຸ່ງອະລຸນ ສ່ອງລອດເຂົ້າຕາມຫວ່າງໄມ້ໃບຫຍ້າ, ນ້ຳຄ້າງສະທ້ອນແສງ ສິ່ງປະກາຍແວວວັບຄືເມັດເພັດໄຫມຄຳ, ເຮືອນໂບຮານຫລັງສູງຫາກໍຕື່ນຈາກ ຄວາມຫລັບໄຫລຂອງລາຕີການທີ່ຫນາວສະທ້ານໃນທ້ອງເດືອນຕຸລາ, ໃບພ້າວຕີງນວຍນາຍ ລັ່ນຄອບແຄບ ເມື່ອສາຍລົມພັດຜ່ານ. ເຈົ້າຂອງເຮືອນໂບຮານເທົ້າແຂນສອກໃສ່ຂອບປ່ອງຢ້ຽມ ປ່ອນຫນ້າແນມເບິ່ງທ້ອງທົ່ງນາ, ທ້ອງຟ້າ ແລະ ກ້ອນເມກສີຂາວນວນ.

" ສະບາຍດີປ້າຄູ !"

ຄົນກາຍທາງເອີ້ນມາໃສ່ແບບອາລົມດີ.



"ເອີ ສະບາຍດີ ຊິໄປໃສແຕ່ເຊົ້າແທ້ລະ ກິ ?".

"ຊິໄປຕະຫລາດ ຊື້ດອກໄມ້ອວຍພອນວັນຄູ"

ປ້າຄູຊວດຕື່ນ ເມື່ອຮູ້ວ່າຕົນເອງຍັງມີຫລາຍອັນທີ່ຈະຕ້ອງເຮັດໃນມື້ນີ້. ຄືນນີ້ຕົນເອງນອນບໍ່ຫລັບ ກໍ່ຍ້ອນເລື່ອງນີ້ ເພາະບໍ່ຮູ້ຈະປັບສະພາບຕົວເອງໃສ່ກັບຄວາມຕື່ນເຕັ້ນ ໃນເວທີອອກຄຳເຫັນ ໃຫ້ແກ່ວັນຄູແນວໃດ ຈຶ່ງຈະເຫມາະສົມ, ຕົນເອງໃນຖານະເປັນຜູ້ອຳນວຍການໂຮງຮຽນປະຖົມ ແນ່ນອນແລ້ວ ທີ່ຈະຕ້ອງໄດ້ປະເຊີນຫນ້າກັບຫລາຍອັນ ຫລາຍແນວ ໂດຍສະເພາະກັບແຂກຄົນ ທີ່ເປັນພໍ່ແມ່ນັກຮຽນ ແລະ ລູກສິດທີ່ເຂົ້າອວຍພອນນັບເປັນຮ້ອຍໆ.

ລົດຖີບຄັນເກົ່າ ທີ່ປ້າຄູໃຊ້ມານານກວ່າ 20 ປີ ຍັງຮັກສາສີສັນ ແລະ ຄວາມທົນທານຂອງມັນ ກໍ່ຍ້ອນເດັກນ້ອຍໃນເຮືອນບໍ່ກ້າເອົາໄປຂີ່ຫລິ້ນ ເພາະໃຜໆກໍ່ຮູ້ວ່າປ້າຄູຮັກມັນຫລາຍກວ່າສິ່ງອື່ນໃດ, ລົດຄັນນີ້ບໍ່ພຽງແຕ່ຊ່ວຍໃຫ້ປ້າຄູ ໄປໂຮງຮຽນທັນເວລາ ຍັງເຮັດໃຫ້ປ້າໄດ້ຮັບ

ຄວາມສະດວກ ໃນການໄປມານຳອີກ. ເຊົ້ານີ້ນີ້ ປ້ານາ ຮອດໂຮງຮຽນກ່ອນໝູ່ ເພື່ອກວດກາເບິ່ງຄວາມພ້ອມ ສຳລັບ ການສະເຫລີມສະຫລອງບຸນວັນຄູ. ບຸນວັນຄູຜ່ານມາ ປ້າບໍ່ຄ່ອຍຕື່ນເຕັ້ນ ແລະ ພິຖີພິຖັນພໍເທົ່າໃດ ແຕ່ປີນີ້ ທາງຂັ້ນເທິງໄດ້ກຳນົດໃຫ້ເປັນຄັ້ງປະຫວັດການ, ເມື່ອເບິ່ງ ເຖິງການກະກຽມແລ້ວ ພໍ່ແມ່ນັກຮຽນ, ຄູ ແລະ ນັກຮຽນ ກໍຄືວ່າໄດ້ພ້ອມພຽງຮຽງໜ້າກັນເປັນພິເສດ. ຕ່າງຄົນກໍຕ່າງ ລໍຄອຍດ້ວຍຫົວໃຈທີ່ຈົດຈໍ່. ບໍ່ທັນຮອດໂມງເປີດພິທີ ແຂກຄົນ ກໍມາພ້ອມໜ້າພ້ອມຕາກັນ ຢູ່ໃນສະໂມສອນຂອງໂຮງຮຽນ ຫມົດແລ້ວ, ຄູແຕ່ລະຄົນ ຖືກເຊີນຂຶ້ນນັ່ງຢູ່ເທິງເວທີ ຢ່າງມີກຽດ, ນັກຮຽນແຕ່ລະຄົນ ກໍມີຄວາມກະຕືລືລົ້ນ, ຊໍ່ດອກໄມ້ແຕ່ລະຊໍ່ ຂອງຂວັນແຕ່ລະຫໍ່ ຄ້າຍຄືວ່າແຕ່ລະຄົນ ໄດ້ກະກຽມມາ ເພື່ອເປົ້າໝາຍຂອງເຂົາເຈົ້າແຕ່ລະຄົນ.

ພິທີທາງການໄດ້ເປີດຂຶ້ນແລ້ວ, ປ້າຄູກ້າວຂຶ້ນສູ່ ເວທີປາໄສ ດ້ວຍສຽງຕົບມືຢ່າງສະໜັ່ນຫວັ່ນໄຫວ.

ຕອນໜຶ່ງປ້າເວົ້າວ່າ :

" ຈຸດປະສົງ ໃນການຈັດຕັ້ງໃຫ້ມີວັນຄູແຫ່ງຊາດລາວຂຶ້ນ ກໍເພື່ອໃຫ້ພົນລະເມືອງລາວທຸກເຜົ່າ, ທຸກຊັ້ນຄົນໃນວົງສາລະນາຍາດແຫ່ງຊາດລາວ ໄດ້ມີໂອກາດທົບທວນຄືນເຖິງວິວັດທະນາການ ແຫ່ງຊີວິດຂອງຄົນໃນແຕ່ລະໄລຍະໂດຍເລີ່ມຈາກຊີວິດໃນຍາມເຍົາໄວ ຊຶ່ງໄດ້ເຂົ້າຮ່ຳຮຽນຊັ້ນປະຖົມ, ມັດທະຍົມ, ອຸດົມ ແລະ ຊັ້ນສູງ ໄປກວ່ານັ້ນຈົນມາເຖິງປະຈຸບັນ ວ່າຕົນໄດ້ຮັບຫຍັງແດ່ ຈາກຄູອາຈານທີ່ໄດ້ຖ່າຍທອດວິຊາຄວາມຮູ້ໃຫ້ ຈົນກາຍເປັນຜູ້ມີວິຊາຊີບ, ມີສະຕິປັນຍາ, ມີຄວາມຮູ້ ຄວາມສາມາດ ".

ປ້າຄູເວົ້າມາຮອດນີ້ ກໍຢຶກຈອກນ້ຳຂຶ້ນດື່ມ ໜາດຄໍ, ນະທີ່ປະຊຸມມິດງຽບຄືບໍ່ມີຄົນ, ທຸກຄົນ ຕັ້ງໃຈຈົດຈໍ່ຮັບຟັງຄວາມເວົ້າເຫລົ່ານັ້ນ ແລ້ວປ້າຄູກໍເວົ້າຕໍ່ວ່າ :

" ເພື່ອສະແດງອອກເຖິງ ຄວາມກະຕັນຍູກະຕະເວທີ ຂອງຕົນທີ່ມີຕໍ່ຄູ ຜ່ານມາພວກເຮົາ ໄດ້ເຮັດຫຍັງແດ່ ? ... "

ຄຳຖາມນັ້ນບໍ່ມີຄຳຕອບ ນອກຈາກໜ່ວຍຕາດຳຂອງນ້ອງນັກຮຽນ, ຄູອາຈານ ແລະ ພໍ່ແມ່ປະຊາຊົນ ໃນທີ່ນັ້ນ ຈ້ອງແນມມາໃສ່ຜູ້ປາໄສ ຢູ່ເທິງເວທີພຽງຄົນດຽວ.

" ພວກນ້ອງນຸ່ງລູກຫລານໃນທີ່ນີ້ຮູ້ບໍ່ວ່າ : ປ້າເປັນຄູມາແລ້ວເກືອບ 35 ປີ, ປ້າເຄີຍເປັນ ນັກຮຽນ ເຄີຍມີຄູແລະ ຄວາມກະຕັນຍູຕໍ່ຄູ ປ້າຈຶ່ງເຮັດໜ້າທີ່ຄູດ້ວຍຄວາມບໍລິສຸດໃຈມາຈົນເຖິງເທົ່າທຸກວັນນີ້ ແລະ ປ້າກໍຈະເປັນຄູຕະຫລອດໄປ ຈົນຮອດອາຍຸກະສຽນລັດຖະການ ".

ເວົ້າມາຮອດນີ້ ປ້າກືນນ້ຳລາຍລົງຄໍ ເຫລືອດສາຍຕາໄປທົ່ວໆ ແລ້ວເວົ້າຕໍ່ວ່າ :

" ລູກສິດຂອງປ້າມີເຕັມບ້ານເຕັມເມືອງ ມີທັງພະນັກງານ, ທະຫານ ຕຳຫລວດ, ພໍ່ຄ້າຊາວຂາຍ, ກຳມະກອນ ຕະຫລອດຮອດຊາວໄຮ່ນາ ມາຮອດຊູມື້ນີ້ປ້າຈຶ່ງຮູ້ວ່າ : ອາຊີບຄູສຸດທີ່ມີກຽດ ". ສຽງຕົບມືດັງຂຶ້ນສະໜັ່ນຫວັ່ນໄຫວ, ທຸກຄົນໃນທີ່ນັ້ນລຸກຂຶ້ນ ນຳເອົາຊໍ່ດອກໄມ້ ແລະ ພວງມາໄລຂຶ້ນມາມອບໃຫ້ປ້າຄູ ຈົນບໍ່ຮູ້ວ່າ

ໃຜເປັນໃຜ ປ້າກ່າວຂອບໃຈ ແລະ ຍິ້ມຕອບຮັບ ແຕ່ໃນຮອບຍິ້ມນັ້ນ ປ້າພວມສະອື້ນໄຫ້ ປ້າຮ້ອງໄຫ້ກັບຄວາມດີໃຈ.

" ຫລານຂໍອວຍພອນແດ່ປ້າຄູ ຈົ່ງມີສຸຂະພາບເຂັ້ມແຂງ ມີຄວາມສຸກ ຄວາມມ່ວນຊື່ນ "

ຄູແຕ່ລະຄົນ ໄດ້ຮັບການອວຍພອນ ໃນເວລາດຽວກັນ ອັນເຮັດໃຫ້ບັນຍາກາດໃນເວລານັ້ນ ສຸດທີ່ມີຄວາມໝາຍສຳລັບວັນຄູແຫ່ງຊາດ 7 ຕຸລາ ຊຶ່ງແມ່ນວັນແຫ່ງປະຫວັດສາດຂອງຄູລາວ ແລະ ແຫ່ງປວງຊົນລາວທຸກເຜົ່າຊົນ ລະນຶກເຖິງບຸນຄຸນຂອງຄູ. ໃນສະຖານທີ່ຫ້ອງປະຊຸມສຽງເພງບຸນຄຸນຄູຂອງຄູກະເສມສີ ທີ່ເປັນຜູ້ປະດິດແຕ່ງຂຶ້ນນັ້ນ ໄດ້ກ້ອງກັງວານເຂົ້າໃນສ່ວນເລິກ ຂອງຫົວໃຈແຕ່ລະຄົນ ແລະ ທຸກຄົນກໍພ້ອມກັນຮ້ອງໄປນຳເພງນັ້ນວ່າ :

" ບຸນຄຸນຄູສູງສົ່ງເໜືອໃດໆ<br>
ແມ່ນໃຜໆກໍມີຄູ ສັ່ງສອນມາ<br>
ເຮົາຂາດຄູ ຈະຢູ່ດ້ວຍອັນໃດ

ຄູຍິ່ງໃຫຍ່ ຄືຄູຄຳຂອງພວກເຮົາ

..........."

ສຽງເພງນັ້ນບໍ່ທັນຈົບ ແຕ່ປ້າຄູກໍພົກຕົວອອກມາ ແລະ ຄິດວ່າຈະກັບບ້ານ ຍ້ອນອາຍຸສັງຂານ ຈຶ່ງທົນຕໍ່ບັນຍາກາດຂອງຄວາມກະຕຸ້ນໃຈນັ້ນບໍ່ໄຫວ. ປ້າອູ້ມຊໍ່ດອກໄມ້ ຈູງລົດຖີບຍ່າງ ອອກຈາກປະຕູຮົ້ວໂຮງຮຽນມາ ກໍມີລົດເກັງຄັນໜຶ່ງຈອດລໍຖ້າຢູ່ກ່ອນແລ້ວ ເຈົ້າຂອງລົດພ້ອມດ້ວຍຊໍ່ດອກໄມ້ ແລະ ຫໍ່ຂອງຂວັນທີ່ໃຫຍ່ຍ່າງເຂົ້າມາຫາແລ້ວເວົ້າວ່າ :

" ສະບາຍດີຍາເອື້ອຍ ! "

ປ້າຄູວາກຄືນມາຕາມສຽງທັກທາຍ ແລ້ວແນມເບິ່ງໜ້າຊາຍໜຸ່ມ ດ້ວຍຄວາມແປກໃຈ.

" ສະບາຍດີອາວ ອາວແມ່ນ ... ແມ່ນ "

" ຂ້ານ້ອຍແມ່ນທ້າວເຄນ ນັກຮຽນຫ້ອງທີ່ສອງນ້ອຍຂອງຍາເອື້ອຍ ເມື່ອ 20 ປີກ່ອນ "

ປ້າຄູທົບທວນຄືນຫາຄວາມຫລັງ ເມື່ອຫລາຍປີຜ່ານມາ ແຕ່ຄິດແນວໃດກໍຄິດບໍ່ອອກ.

" ທ້າວເຄນ ທ້າວເຄນໃດເນາະ ປ້າຈື່ບໍ່ຄ່ອຍໄດ້ປານໃດ "

" ຄູຄົນດຽວ ລູກສິດເປັນຮ້ອຍເປັນພັນ ຈື່ບໍ່ໄດ້ກໍຖືວ່າເປັນຂອງທຳມະດາ ແຕ່ນັກຮຽນຄົນໜຶ່ງ ກ່ອນຈະມີມື້ນີ້ໄດ້ ກໍຍ້ອນມີຄູເປັນຜູ້ສັ່ງສອນນັ້ນ ຖືວ່າຄືນໆນັ້ນບໍ່ເຄີຍລືມເລີຍຈົນຕະຫລອດຊີວິດ ".

ຄຳເວົ້ານັ້ນເຮັດໃຫ້ປ້າຄູຊາບຊຶ້ງຕຶງໃຈ ແຕ່ກໍຍັງພະຍາຍາມທົບທວນຄວາມຫລັງ ເພື່ອຊາຍໜຸ່ມ ທີ່ມີຊື່ວ່າເຄນ ໄດ້ມອບຊໍ່ດອກໄມ້ ແລະ ຂອງຂວັນ ໃຫ້ແກ່ປ້າຄູດ້ວຍຄວາມນອບນ້ອມຖ່ອມຕົນ.

" ເນື່ອງໃນວັນຄູແຫ່ງຊາດ ຂ້ານ້ອຍຂໍອວຍພອນແດ່ຄູຈົ່ງມີແຕ່ຄວາມສຸກ ແລະ ຄວາມສົມຫວັງໃນຊີວິດ ".

" ຂອບໃຈ ຂອບໃຈນ້ອງຫລາຍໆ ".

ປ້າຄູປ້າຍມືອັ້ນເຊັດນ້ຳຕາ ໃນລາບຍິ້ມຂອງຄົນ

ຊະລາ ແຕ່ໃນໄລຍະເວລາທີ່ກະຕຸ້ນໃຈນັ້ນ ຊາຍໜຸ່ມລຶບນັ້ນ ກໍຂຶ້ນລົດຈາກໄປ ປະປ່ອຍໄວ້ແຕ່ພາບພົດຂອງຄວາມກະຕັນຍູກະຕະເວທີ, ປ້າຄູຢືນແນມນຳຫລັງ ຈົນລົດຄັນນັ້ນຫາຍຈາກໄປ. ແຕ່ໃນເວລານັ້ນ ໄດ້ມີຄົນໆໜຶ່ງ ໃສ່ສົ້ງຂາສັ້ນ, ເສື້ອຍ້ອມນ້ຳຄາມແກ່ຕາຍສີ ກ້າວຂາລົງຈາກສາມລໍ້ຄັນເກົ່າ ພ້ອມດ້ວຍຊໍ່ດອກໄມ້ສົດ ຍ່າງມາຫາປ້າຄູຢືນກົງ ປົດໝວກໃບລໍ້ອອກ ແລ້ວກົ້ມຫົວຄຳນັບ.

" ສະບາຍດີຍາເອື້ອຍ ! ".

ປ້າຄູແນມເບິ່ງຄົນໆນັ້ນ ແບບງຶນງົງ ຄຶ້ນຄິດ.

" ສະບາຍດີນ້ອງ ນ້ອງແມ່ນ ແມ່ນ ... "

" ຂ້ານ້ອຍແມ່ນທ້າວຄຳ ນັກຮຽນຫ້ອງທີສອງນ້ອຍຂອງຍາເອື້ອຍ ເມື່ອ 20 ປີກ່ອນ ".

ປ້າຄູບໍ່ມີເວລາທົບທວນຫາເຫດການຕ່າງໆ ຂອງຄວາມຫລັງ ແຕ່ປ້າກໍຊາບຊຶ້ງຕໍ່ຄວາມກະຕັນຍູຂອງຊາຍຄົນນີ້.

" ວັນຄູແຫ່ງຊາດ 7 ຕຸລາ ແມ່ນວັນທີ່ຂ້ານ້ອຍ

ຄອງຄອຍ ເພື່ອວ່າຕົນເອງຈະມີໂອກາດ ເຮັດອັນໃດໜຶ່ງເພື່ອຄູ ".

ເວົ້າແລ້ວ ຊາຍໜຸ່ມກໍມອບຊໍ່ດອກໄມ້ໃຫ້ປ້າຄູ.

" ຂ້ານ້ອຍຂໍອວຍພອນແດ່ຄູ ຈົ່ງມີແຕ່ຄວາມສຸກຄວາມມ່ວນຊື່ນ ອາຍຸໝັ້ນຂວັນຍືນ ".

ປ້າຄູແນມເບິ່ງຊາຍໜຸ່ມ ດ້ວຍຄວາມອີ່ດູຮັກແພງແລະ ປ່ຽມລົ້ນໄປດ້ວຍຄວາມສຸກ

" ຂອບໃຈຫລາຍໆ ທ້າວຄຳ ທີ່ເຈົ້າເປັນຄົນກະຕັນຍູ ".

" ຄູເອີຍ ! ມາຮອດຊູ່ນີ້ ນ້ອງຈຶ່ງຮູ້ຄຸນຄ່າຂອງຄູແຕ່ທຸກຢ່າງມັນກໍສວາຍເກີນໄປແລ້ວ ".

" ທ້າວຄຳ ທ້າວຄຳຂອງຄູ ... "

ຊາຍໜຸ່ມເຊືອງໜ້າ ປ້າຍມືຂຶ້ນເຊັດນ້ຳຕາ ແຕ່ປ້າຄູກໍຮູ້ວ່າ : ນັ້ນມັນແມ່ນນ້ຳຕາ ຂອງຄວາມກິນແໜງແຄງໃຈຕໍ່ຊີວິດຍາມເຍົາໄວ ທີ່ປ່ອຍໃຫ້ການເວລາທີ່ມີຄ່າຜ່ານໄປ

ໂດຍເປົ່າດາຍ. ທ້າວຄໍາກົ້ມຫົວອໍາລາປ້າຄູ ແລ້ວຍ່າງຂາ ຂຶ້ນລົດສາມລໍ້ຈາກໄປ ແຕ່ປ້າຄູຍັງຢືນຄິດເຖິງພາບເກົ່າໆ ກ່ຽວກັບຕົວຂອງຊາຍໜຸ່ມຄົນນີ້ ແຕ່ປ້າຄູກໍຄິດເຫັນພາບ ຕອນໜຶ່ງວ່າ : ທ້າວຄໍາຂີ້ດື້ ຮຽນໜັງສືຂີ້ຄ້ານ ລັດຕິໝູ່ ຢ້ານຄວາມຜິດກໍໜີໂຮງຮຽນໄປເລີຍ.

ປ້າຄູຈົ່ມພຶມພໍາອອກມາຄ່ອຍໆວ່າ :

" ຄໍາເອີຍ ທາງສາຍນີ້ ແມ່ນນ້ອງເລືອກເອງ ດີແຕ່ນ້ອງຍັງເປັນຄົນກະຕັນຍູ ...

ປ້າຄູຖອນຫາຍໃຈບາດຍາວໆ ກ່ອນຈະປ້າຍຂາ ຂຶ້ນລົດຖີບ ...

# ປະຫວັດຫຍໍ້ຂອງຜູ້ຂຽນ

ບຸນເສີນ ແສງມະນີ ມີຖິ່ນກຳເນີດຢູ່ ເມືອງປາກຊັນ ແຂວງບໍລິຄຳໄຊ ຈົບການສຶກສາຈາກ ມະຫາວິທະຍາໄລ ພາສາຕ່າງປະເທດ ທີ່ນະຄອນຫລວງມົດສະກູ, ອະດີດ ສ.ສ.ໂຊວຽດ. ປະຈຸບັນສັງກັດຢູ່ຫ້ອງການເລຂາລັດຖະມົນຕີ ວ່າການກະຊວງສຶກສາທິການ ... ຈຸດພິເສດ ເປັນຄົນມັກ ພົບປະສ້າງສັນ, ມັກອ່ານ, ມັກຄົ້ນຄວ້າ ແລະ ມັກທີ່ສຸດກໍຄື ການຂີດຂຽນ, ເຂົາມັກຂຽນບົດປະພັນ ປະເພດເລື່ອງສັ້ນ, ບົດຂຽນນັ້ນ ສ່ວນຫລາຍຈະເວົ້າເຖິງ ການສ້າງສັນສັງຄົມ ໃນແງ່ດີ ... ແຕ່ບາງທີ ກໍເວົ້າເຖິງວິຖີຊີວິດຊາວບ້ານ ທີ່ດີ້ນຮົນຕໍ່ສູ້ ເພື່ອການຢູ່ລອດ ແລະ ຊອກຫາທາງອອກ

ໃຫ້ແກ່ຕົນເອງ ... ບົດປະພັນບາງບົດ ກໍຕິດພັນກັບຊີວິດໃນຍາມເຍົາໄວຂອງຜູ້ຂຽນ ທີ່ບ້ານເກີດເມືອງນອນ ... ບາງຄັ້ງ ເຂົາມັກເວົ້າວ່າ " ຈະບໍ່ມີຄວາມສຸກໃດ ເທົ່າກັບຄວາມສຸກໃນຍາມເປັນເດັກນ້ອຍ ແຕ່ສຳລັບຂ້ອຍແລ້ວ ... ຂ້ອຍບໍ່ຢາກເກີດມາເປັນເດັກນ້ອຍເລີຍ " ນັ້ນກໍເພາະວ່າບຸນເສີນ ແສງມະນີ ເຂົາໄດ້ຕໍ່ສູ້ກັບພາຍຸຊີວິດແຕ່ຍາມເຍົາໄວແລ້ວ ...



ບຸນເສີນ ແສງມະນີ

UNICEF
ອຸຍນີເຊັບ